رئاسة الشؤون الدينية
بالمسجد الحرام والمسجد النبوي

# ບົດຮຽນສຳຄັນສຳຫລັບຜູ້ຄົນທົ່ວໄປ

ພາສາລາວ | لاو | الدروس المهمة لعامة الأمة


ຜູ້ແຕ່ງ:
ທ່ານອິມາມໃຫຍ່ ຜູ້ຮູ້ ອັບດຸລອາຊິສ ບິນ ອັບດຸລລາຮ໌ ບິນ ບາຊ໌ ຂໍໃຫ້ພຣະເຈົ້າໂຜດປຽນທ່ານ

# الدُّرُوسُ الْمُهِمَّةُ لِعَامَّةِ الْأُمَّةِ

# ບົດຮຽນສຳຄັນສຳຫຼັບຜູ້ຄົນທົ່ວໄປ

ຜູ້ແຕ່ງ:

ທ່ານອິມາມໃຫຍ່ ຜູ້ຮູ້ດີ ອັບດຸລອາຊີສ ບິນ ອັບດູລລາຮ໌

ບິນ ບາຊ໌ ຂໍໃຫ້ພຣະເຈົ້າໂພດປຽນທ່ານ

## ບົດຮຽນສຳຄັນສຳຫຼັບຜູ້ຄົນທົ່ວໄປ

ທ່ານອາຈານຜູ້ຊົງຄຸນນະວຸດ ທ່ານແຊັກອຸລະມາ ອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາຊ - ຂໍອັລລໍຫ໌ຊົງເມດຕາທ່ານ-

**ດ້ວຍພຣະນາມຂອງອັລລໍຫ໌ ຜູ້ຊົງກະລຸນາປານີ ຜູ້ຊົງເມດຕາສະເໝີ**

**ຄຳນຳຜູ້ຂຽນ**

ມວນການສັນລະເສີນເປັນຂອງອັລລໍຫ໌ ພຣະເຈົ້າແຫ່ງໂລກຈັກວານນີ້, ລາງວັນຕອບແທນທີ່ດີໃນບັ້ນປາຍຊີວິດເປັນຂອງບັນດາຜູ້ຍຳເກງ ຂໍຄຳສະດຸດີ ແລະ ຄວາມສັນຕິສຸກແຫ່ງອັລລໍຫ໌ຈົ່ງມີແດ່ບ່າວ ແລະ ສາສະນະທູດຂອງພຣະອົງ ທ່ານນະບີຂອງເຮົາ ມຸຮຳມັດ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ແລະ ບັນດາວົງຕະກູນຂອງທ່ານຕະຫຼອດຈົນບັນດາສາວົກຂອງທ່ານໂດຍກັນທົ່ວໜ້າ.

ຕໍ່ຈາກນີ້:

ເປັນຄຳກ່າວສະຫຼຸບຫຍໍ່ຂອງການອະທິບາຍບາງຢ່າງທີ່ມຸສລິມທົ່ວໄປ ຈຳເປັນຕ້ອງຮັບຮູ້ກ່ຽວກັບສາສະນາອິສລາມ ຂ້າພະເຈົ້າໃຫ້ຊື່ວ່າ: ບົດຮຽນສຳຄັນສຳຫຼັບປະຊາຊົນທົ່ວໄປ

ຂ້າພະເຈົ້າຂໍຕໍ່ເອກອົງອັລລໍຫ໌ຕະອາລາ ຊົງໂປດໃຫ້ບັນດາມຸສລິມທົ່ວໄປໄດ້ຮັບປະໂຫຍດຈາກໜັງສືເລັ້ມນີ້ ແລະ ໂປດຊົງຮັບຜົນງານເລັ້ມນີ້ຈາກຂ້າພະເຈົ້າດ້ວຍທອນ

ແຫ້ພຣະອົງຊົງເປັນຜູ້ຊົງເມດຕາທີ່ດີເລີດ.

ອັບດຸລອະຊິຊ ບິນ ອັບດຸລລໍຫ໌ ບິນ ບາຊ ບົດຮຽນສຳຄັນສຳຫຼັບປະຊາຊົນທົ່ວໄປ[1]

## ບົດຮຽນທີ່ ໜຶ່ງ : ສຸເຣາະຫ໌ອັລ-ຟາຕິຫະຫ໌ ແລະ ສຸເຣາະຫ໌ສັ້ນໆ

ມຸສະລິມຈຳເປັນຕ້ອງສຶກສາຮຽນຮູ້ຊູເຣາະຫ໌ ອັລຟາຕິຫະຮ໌ ແລະບົດຊູເຣາະສັ້ນໆ
ເຊິ່ງເຂົາພໍ່ຈະມີຄວາມສາມາດອ່ານແລະທ່ອງຈຳໄດ້ຢ່າງຖືກຕ້ອງເຊັ່ນ: ຊູເຣາະຫ໌ ອັລ- ຊັລຊະລະຫ໌ ຮອດ ຊູເຣາະຫ໌ ອັລ-ນາສ ແລະຈຳເປັນຕ້ອງມີຄວາມເຂົ້າໃຈຄວາມໝາຍຂອງມັນ.

## ບົດຮຽນທີ່ສອງ : ຫຼັກການອິສລາມ

ການອະທິບາຍຄວາມໝາຍຂອງຫຼັກການອິສລາມ
5 ປະການ ແລະ ຂໍ້ທຳອິດເປັນຂໍ້ທີ່ສຳຄັນທີ່ສຸດຄື: "ອັຊ ຊະຮາດະຮ໌" ລາອິລາຮະ ອິລລັລລໍຫ໌ ວະ ອັນນະ ມຸຮຳມັດ ຣໍຊູລລຸລລໍຫ໌
ຄືການປະຕິຍານຕົນວ່າບໍ່ມີພຣະເຈົ້າອື່ນໃດສົມຄວນແກ່ການເຄົາລົບພັກດີນອກຈາກອັລລໍຮ໌ ແລະມູຮຳຫມັດ ຄືສາດສະດາທູດຂອງພຣະອົງ
ພ້ອມທັ້ງອະທິບາຍຄວາມຫມາຍ
ກົດເກນຫຼືເງື່ອນໄຂຂອງຄຳວ່າ "ລາອິລາຮະ ອິລລັລລໍຮ໌" ຄວາມໝາຍຂອງມັນຄື ບໍ່ມີພຣະເຈົ້າອື່ນໃດ ນັ້ນເປັນການປະຕິເສດສັບພະສິ່ງທັ້ງມວນທີ່ຖືກເຄົາລົບບູຊາ ນອກຈາກອັລລໍຮ໌ "ອິລລັລລໍຮ໌" ນອກຈາກອັລລໍຮ໌

[1] ໜັງສືຟັດຕະວາມະກໍລາຕ ມຸດນູອະຫ໌ (3/ 288- 298) .

ຄືການຢືນຢັນທີ່ຈະເຄົາລົບພັກດີພຽງສະເພາະຕໍ່ອັລລໍຮ໌ເທົ່ານັ້ນໂດຍບໍ່ມີການຕັ້ງພາຄີໃດໆຕໍ່ພະອົງ. ສໍາຫລັບກົດເກນ ຫຼືເງື່ອນໄຂຂອງ "ລາອິລາຮະ ອິລລັລລໍຮ໌" ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຮ໌
ຄືການປະຕິເສດຄວາມໂງ່ຈ້າເບົາປັນຍາ,
ການເຊື່ອຫມັ້ນຈາກໃຈຈິງທີ່ປະຕິເສດການສົງໄສຄ້າງຄາໃຈ,
ຄວາມບໍລິສຸດໃຈໂດຍປະຕິເສດການຕັ້ງພາຄີທີ່ແອບແຝງ,
ການມີສັດຈະທີ່ປະຕິເສດຄວາມແປກປອມ,
ມີຄວາມຮັກທີ່ປະຕິເສດການກຽດຊັງ,
ປະຕິບັດຕາມຄວາມບັນຊາສັ່ງໃຊ້ເຊິ່ງປະຕິເສດການປະຖິ້ມ,
ການຍອມຮັບທີ່ປະຕິເສດການຂົ່ມເຫັງ,
ແລະການປະຕິເສດການເຄົາລົບພັກດີສິ່ງອື່ນນອກຈາກອັລລໍຮ໌
ເຊິ່ງຂ້າພະເຈົ້າໄດ້ຮອບຮ່ວມມັນໄວ້ໃນອົງການສອງບົດດັ່ງນີ້:

ອັນຄວາມຮູ້ ເຊື່ອມັ່ນຈາກຈິດໃຈ ແລະ ຄວາມບໍລິສຸດໃຈ ແລະ ຄວາມສັດຈິງຂອງທ່ານ ພ້ອມດ້ວຍຄວາມຮັກ ການຍອມຮັບ ແລະ ການປະຕິບັດຕາມຄໍາບັນຊາໃຊ້ ແລະ ອັນທີ່ແປດທີ່ເພີ່ມຂຶ້ນມາຄືການປະຕິເສດພຣະເຈົ້າອື່ນນອກຈາກອັລລໍຫ໌

ພ້ອມທັ້ງໃຫ້ຄໍາອະທິບາຍຂອງຄໍາປະຕິນຍານວ່າ ມຸຮໍາມັດຄືສາດສະດາທູດແຫ່ງອັລລໍຮ໌
ຕາມໂດຍຄວາມຫມາຍຂອງມັນ
ຄືການເຊື່ອແລະຍອມຮັບໃນສິ່ງທີ່ທ່ານນໍາມາບອກກ່າວ,
ເຊື່ອແລະປະຕິບັດຕາມຄໍາແນະນໍາສັ່ງສອນຂອງທ່ານ,
ອອກຫ່າງຈາກຂໍ້ຫ້າມ, ໃຫ້ຄໍາຕັກເຕືອນແລະຫ້າມປາມ,

ແລະບໍ່ຕ້ອງເຄົາລົບພັກດີຕໍ່ ອັລລໍຮ໌ ຍົກເວັ້ນຕາມຮູບແບບທີ່ພະອົງຊົງບັນຊາໃຊ້ ແລະທີ່ທ່ານສາດສະດາທູດມຸຮໍາມັດ ນໍາມາບອກກ່າວໄວ້. ຈາກນັ້ນຈໍາເປັນຕ້ອງແຈ້ງອະທິບາຍໃຫ້ຜູ້ສຶກສາໄດ້ຮັບຮູ້ເຖິງ ຫຼັກການອິສລາມຫ້າປະການຂໍ້ອື່ນໆ ເປັນຕົ້ນວ່າ ການລະຫມາດ, ການບໍລິຈາກຊະກາດ(ເສຍພາສີ), ການຖືສິ້ນອົດໃນເດືອນຣໍມາດອນ, ການໄປປະກອບພິທີຮັດຢູ່ເທດຊາອຸດີອາຣະເບຍ ສໍາລັບຜູ້ທີ່ມີຄວາມສາມາດໃນການເດີນທາງ.

## ບົດຮຽນທີ່ສາມ : ຫຼັກການສັດທາ

ຫຼັກການສັດທາປະກອບມີ 6 ປະການຄື: ສັດທາເຊື່ອໃນອັລລໍຮ໌, ສັດທາຕໍ່ບັນດາມາລະອິກາເທວະດາຂອງພຣະອົງ, ສັດທາເຊື່ອໃນບັນດາຄໍາພີຂອງພຣະອົງ, ສັດທາຕໍ່ສາດສະດາທູດຂອງພຣະອົງ, ສັດທາເຊື່ອໃນມື້ສິ້ນໂລກ, ແລະສັດທາຕໍ່ກໍານົດພາວະທັ້ງຄວາມດີ ແລະ ຄວາມຊົ່ວວ່າລ້ວນມາຈາກພຣະອົງອັລລໍຮ໌.

## ບົດຮຽນທີ່ ສີ່ : ປະເພດຂອງເຕົາຮີດ ແລະ ຊີຣິກ

ຄໍາອະທິບາຍກ່ຽວກັບປະເພດຂອງເຕົາຮີດ ເຊິ່ງມີຢູ່ 3 ປະການດັ່ງນີ້:

1. ເຕົາຮີດ ອັລ-ຣຸບູບິຍະຮ໌
2. ເຕົາຮີດ ອັລ-ອຸລູຮິຍະຮ໌
3. ເຕົາຮີດ ອັລ- ອັສມາອ໌ວະອັສຊິຟາດ.

1- ເຕົາຮີດ ອັລ-ຣຸບູບິຍະຮ໌ ຄື:

ການເຊື່ອສັດທາຫມັ່ນຄົງຕໍ່ພຣະອົງອັລລໍຮ໌ ຕະອາລາ ຜູ້ຊົງສ້າງສັບພະສິ່ງທັ້ງຫລາຍ, ຜູ້ຊົງບໍລິຫານຈັດການທັ້ງຫມົດ, ປາດສະຈາກຫຸ້ນສ່ວນໃດ ໆ ທັ້ງໝົດໃນນີ້.

2- ເຕົາຮີດ ອັລ-ອຸລູຮິຍະຮ໌ ຄື: ການເຊື່ອສັດທາຕໍ່ພຣະອົງອັລລໍຮ໌ ຕະອາລາ ວ່າພຣະອົງຄືພຣະເຈົ້າທີ່ສົມຄວນແກ່ການເຄົາລົບພັກດີຢ່າງແທ້ຈິ່ງໂດຍປະສະຈາກຫຸ້ນສ່ວນໃດ ໆ ເຊິ່ງມັນຄືຄວາມໝາຍຂອງຄຳວ່າ: ລາອີລາຮະ ອີລລັລລໍຮ໌ ໝາຍເຖິງບໍ່ມີພຣະເຈົ້າທີ່ສົມຄວນແກ່ການເຄົາລົບພັກດີຢ່າງແທ້ຈິ່ງນອກຈາກ ອັລລໍຮ໌ອົງດຽວເທົ່ານັ້ນ, ດ້ວຍເຫດນີ້ຮູບແບບຂອງການອິບາດະຮ໌ ຫຼືການເຄົາລົບພັກດີທຸກຊະນິດບໍ່ວ່າຈະເປັນການ ລະຫມາດ, ການຖືສິ້ນອົດ ອື່ນ ໆ ລ້ວນແລ້ວຕ້ອງເຮັດດ້ວຍຄວາມບໍລິສຸດໃຈສະເພາະເພື່ອ ອັລລໍຮ໌ ອົງດຽວເທົ່ານັ້ນ ແລະບໍ່ອະນຸຍາດໃຫ້ປະຕິບັດເພື່ອຜູ້ໃດອື່ນນອນຈາກ ອັລລໍຮ໌.

3- ສ່ວນເຕົາຮີດ ອັລ-ອັສມາອ໌ວະອັສຊິຟາດ ຄື : ການເຊື່ອສັດທາຕໍ່ຫຼັກຖານຢືນຢັນທີ່ປະກົດໃນພຣະມະຫາຄຳພີອັລກຸຣອານ ຫຼື ຮະດີຊກ່ຽວກັບພຣະນາມ ແລະ ຄຸນລັກສະນະຂອງພຣະອົງ ດ້ວຍການຍຶດຫມັ່ນຄົງເພື່ອອັລລໍຮ໌ອົງດຽວ ໃນລັກສະນະທີ່ເໝາະສົມກັບພຣະອົງທີ່ສຸດໂດຍປາສະຈາກການ ຕະຮີຟ, ຕະດີລ, ຕັກຢີຟ, ຫຼື ຕໍາຊີລ ໃດໆ

(ຕະຮີຟ ຄື

ການປ່ຽນແປງດັດແປງຄວາມຫມາຍຂອງບົດນັ້ນ ລະເວຍທີ່ຈະພະຍາຍາມເຮັດຄວາມເຂົ້າໃຈ ຫຼື ເຂົ້າໃຈຄວາມໝາຍທີ່ແທ້ຈິງ, ຕະດີດຣ໌ ຄື: ການບໍ່ສົນໃຈທີ່ຈະເຂົ້າໃຈຕົວບົດ ຄວາມຫມາຍການປະຕິເສດໃນມີລັກສະນະຂອງອັລລໍຣ໌ , ຕັກຢີຟ ຄື: ການສັດທາວ່າລັກສະນະ ແລະ ສະຖານະພາບຂອງອັລລໍຣ໌ ເປັນແບບນັ້ນແບບນີ້ ຫຼື ຕັ້ງຄໍາຖາມຊັກຊອນກ່ຽວກັບສະຖານະພາບດັ່ງກ່າວຂອງພຣະ ອົງອັລລໍຣ໌ ແລະ ສ່ວນ ຕໍາຊີລ ຄື: ການເຊື່ອວ່າຄຸນລັກສະນະຂອງອັລລໍຣ໌ ນັ້ນປຽບດັ່ງສິ່ງທີ່ຖືກສ້າງຂອງພຣະອົງ - ຜູ້ແປ) ຕາມພຣະບັນຊາຂອງພຣະອົງທີ່ວ່າ :

﴿قُلۡ هُوَ ٱللَّهُ أَحَدٌ ١ ٱللَّهُ ٱلصَّمَدُ ٢ لَمۡ يَلِدۡ وَلَمۡ يُولَدۡ ٣ وَلَمۡ يَكُن لَّهُۥ كُفُوًا أَحَدُۢ ٤﴾

"ຈົ່ງກ່າວເຖີດ ມູຮໍາມັດ ພຣະອົງ ຄືອັລລໍຫ໌ຜູ້ຊົງເອກະຫນຶ່ງດຽວ (1),ອັລລໍຫ໌ນັ້ນຊົງເປັນທີ່ພຶ່ງ(2), ອັລລໍຣ໌ບໍ່ໄດ້ເກີດ ແລະ ບໍ່ໄດ້ຖືກເກີດ(3), ແລະບໍ່ມີຜູ້ໃດຄືກັນກັບພຣະອົງ(4)". (ຊູເຣາະຫ໌ອັລ-ອິກລາສ :1-4) ແລະ ດໍາລັດຂອງພຣະອົງທີ່ວ່າ :

﴿...لَيۡسَ كَمِثۡلِهِۦ شَيۡءٌۖ وَهُوَ ٱلسَّمِيعُ ٱلۡبَصِيرُ﴾

ຄວາມວ່າ : "ບໍ່ມີສິ່ງໃດສະເຫມີເຫມືອນພຣະອົງ ແລະ ພຣະອົງເປັນຜູ້ຊົງໄດ້ຍິນ ຜູ້ຊົງເຫັນ" (ຊູເຣາະຫ໌ອັລ-ຊູຣໍ ອາຍະຫ໌ 11) ນັກປາດອິສລາມບາງທ່ານໄດ້ແບ່ງເຕົາຮີດປະເພດນີ້ອອກເປັ

ນຂອງຊະນິດ ໂດຍໄດ້ຮ່ວມເຕົາຮີດອັລ-ອັສມາອະອັສຊີຟາດ ໂດຍບໍ່ມີຄວາມຂັດແຍງໃດ ໆ ໃນເລື່ອງດັ່ງກ່າວນີ້ເພາະຈຸດປະສົງຂອງປະເພດນີ້ເປັນທີ່ເຂົ້າໃຈຢ່າງແຈ່ມແຈ້ງປາສະຈາກຂໍ້ສົງໄສແລະບໍ່ຈະແຈ້ງໃດໆທັງຫມົດ.

ສຳຫລັບປະເພດຂອງຊີຣິກ ການຕັ້ງພາຄີຕໍ່ອັລລໍຮ໌ມີຢູ່ 3 ປະເພດເຊັ່ນດຽວກັນຄື :

1. ຊີຣິກ ອັກບັຣ ການຕັ້ງພາຄີໃຫຍ່ (ການສ້າງຕັ້ງພັນທະມິດທີ່ຍິ່ງໃຫຍ່)

2. ຊີຣິກ ອັສກອດ - ການຕັ້ງພາຄີຍ່ອຍ

3. ຊີຣິກ ເຄາະຟີ - ການຕັ້ງພາຄີແບບເຊື່ອງໄວ້.

ຊີຣິກ-ອັກບັຣ ຄື: ການຕັ້ງພາຄີທີ່ໃຫ້ການງານເປັນການກຸສົນ,ສູນເສຍບໍ່ມີຜົນປະໂຫຍດ ແລະຈຳເປັນຕ້ອງຕົກຢູ່ໃນນາລົກຊົ່ວນິລັນດອນສຳຫລັບຜູ້ທີ່ເສຍຊີວິດໃນສະພາບແບບນີ້ ດັ່ງຄຳທີ່ພຣະອົງໄດ້ກ່າວໄວ້ວ່າ:

﴿...وَلَوْ أَشْرَكُوا۟ لَحَبِطَ عَنْهُم مَّا كَانُوا۟ يَعْمَلُونَ ﴿٨٨﴾﴾

ຄວາມໝາຍວ່າ : "ແລະ ຖ້າຫາກພວກເຂົາໄດ້ຕັ້ງພາຄີຂຶ້ນ ແນ່ນອນສິ່ງທີ່ພວກເຂົາໄດ້ກະທຳກັນ ກໍ່ຈະສູນເສຍໄປຈາກພວກເຂົາ" (ອັລ- ອັນອາມ : 88) ພຣະອົງຍັງໄດ້ກ່າວເພີ່ມຕື່ມໄວ້ອີກວ່າ:

﴿مَا كَانَ لِلْمُشْرِكِينَ أَن يَعْمُرُوا۟ مَسَٰجِدَ ٱللَّهِ شَٰهِدِينَ عَلَىٰٓ أَنفُسِهِم بِٱلْكُفْرِ ۚ أُو۟لَٰٓئِكَ حَبِطَتْ أَعْمَٰلُهُمْ وَفِى ٱلنَّارِ هُمْ خَٰلِدُونَ ﴿١٧﴾﴾

ຄວາມໝາຍວ່າ :

"ບໍ່ບັງຄວນແກ່ບັນດາມຸຊຣິກີນທີ່ຈະບູລະນະ ບັນດາມັສຍິດຂອງອັລລໍຫ໌ໃນຖານະທີ່ພວກເຂົາ ໄດ້ຢືນຢັນແກ່ຕົວຂອງພວກເຂົາເອງແລ້ວເຊິ່ງການປະຕິເສດ ສັດທາ ຊົນເຫລົ່ານີ້ແຫລະ ທີ່ບັນດາການງານຂອງພວກເຂົາຈະໄຮ້ຜົນ ແລະ ໃນນະລົກນັ້ນ ພວກເຂົາຈະຢູ່ຕະລອດການ". (ອັລ-ເຕົາບະຮ໌ : 17), ຜູ້ໃດຕາຍໃນສະພາບເຊັ່ນນີ້ ເຂົາຜູ້ນັ້ນຈະບໍ່ໄດ້ຮັບການອະໄພໂທດ ເຂົາຈະບໍ່ໄດ້ເຂົ້າສະຫວັນ ດັ່ງຄໍາພຣະອົງໄດ້ກ່າວໄວ້ວ່າ :

﴿إِنَّ ٱللَّهَ لَا يَغۡفِرُ أَن يُشۡرَكَ بِهِۦ وَيَغۡفِرُ مَا دُونَ ذَٰلِكَ لِمَن يَشَآءُ...﴾

ຄວາມໝາຍວ່າ: "ແທ້ຈິງ ອັລລໍຮ໌ ບໍ່ຊົງໃຫ້ອະໄພໃຫ້ກັບຜູ້ທີ່ຕັ້ງພາຄີຕໍ່ພຣະອົງ ແລະ ພຣະອົງຈະໃຫ້ອະໄພແກ່ຜູ້ທີ່ພຣະອົງພໍໃຈ" [ສູເຣາະຫ໌ ນິຊາ: 48] ພຣະອົງຍັງໄດ້ກ່າວເພີ່ມຕື່ມໄວ້ອີກວ່າ:

﴿...إِنَّهُۥ مَن يُشۡرِكۡ بِٱللَّهِ فَقَدۡ حَرَّمَ ٱللَّهُ عَلَيۡهِ ٱلۡجَنَّةَ وَمَأۡوَىٰهُ ٱلنَّارُۖ وَمَا لِلظَّٰلِمِينَ مِنۡ أَنصَارٖ ٧٢﴾

ຄວາມວ່າ: "ແທ້ຈິງຜູ້ໃດໃຫ້ມີການພາຄີຂຶ້ນແກ່ອັລລໍຫ໌ ແນ່ນອນ ອັລລໍຫ໌ຈະຊົງໃຫ້ສະຫວັນເປັນທີ່ຕ້ອງຫ້າມແກ່ເຂົາ ແລະ ທີ່ພໍານັກຂອງເຂົານັ້ນ ຄືນະລົກ ແລະ ສໍາຫຼັບບັນດາຜູ້ອະທໍານັ້ນຍ່ອມບໍ່ມີຜູ້ຊ່ວຍເຫຼືອໃດໆ". (ອັລ-ມາອິດະຮ໌ : 72).

ສ່ວນຫນຶ່ງຂອງຊີຣິກ ອັກບັຣ ຄື ການຂໍຄວາມຊ່ວຍເຫລືອຈາກຄົນຕາຍ, ຮູບປັ້ນ, ການສາບານ, ການຂ້າສັດເພື່ອຖະວາຍຕໍ່ສິ່ງເຫຼົ່ານັ້ນເປັນຕົ້ນ.

ສ່ວນຊີຣິກ ອັສກໍຣ (ຊີຣິກນ້ອຍ) ຫຼື ການຕັ້ງພາຄີຍ່ອຍ ເຊິ່ງມີຫຼັກຖານປະກົດຢືນຢັນຈາກຕົວບົດຄໍາພີອັລກຸຣອານແລະຊຸນນະ(ແບບຢ່າງ) ເຊິ່ງໄດ້ມີຊື່ວ່າ "ຊີຣິກ" ເຊັ່ນດຽວກັນ ແຕ່ມັນບໍ່ແມ່ນຊະນິດຂອງ ຊີຣິກອັກບັຣ ເຊັ່ນ : ການໂອ້ອວດໃນການເຮັດຢ່າງໃດຢ່າງໜຶ່ງ, ການສາບານດ້ວຍນາມອື່ນນອກຈາກອັລລໍຮ໌, ຄໍາກ່າວທີ່ວ່າ"ຫາກອັລລໍຮ໌ປາດຖະນາ ແລະ ຄົນນັ້ນຄົນນີ້ຕ້ອງການ" ເປັນຕົ້ນ ດັ່ງຄໍາກ່າວຂອງທ່ານນາບີມຸຮໍາມັດ ໄດ້ກ່າວວ່າ:

"أَخْوَفُ مَا أَخَافُ عَلَيْكُمُ الشِّرْكُ الْأَصْغَرُ". فَسُئِلَ عَنْهُ، فَقَالَ: "الرِّيَاءُ"

"ສິ່ງທີ່ຂ້ອຍຢ້ານທີ່ສຸດສໍາຫລັບພວກເຈົ້າຄື ຊີຣິກ -ອັສກໍຣ (ການຕັ້ງພາຄີນ້ອຍ)"[1] ລາຍງານໂດຍທ່ານອີມາມອະຫ໌ມັດ, ອັດ-ເຕາະບະຣໍນີ, ອັລ-ໄບຮາກີ ຈາກມະຫ໌ມູດ ອັລ-ລະບີດ, ອັລ-ອັນສໍຣີໂດຍສາຍສືບທີ່ດີ ແລະລາຍງານໂດຍອັດ-ເຕາະບະຣໍນີໂດຍສາຍສືບທີ່ດີເຊັ່ນກັນ ຈາກມະຫ໌ມູດ ບິນ ລະບີດ ຈາກຣໍຟີ ບິນ ເຄາະດີຈ ຈາກທ່ານນາບີມຸຮໍາມັດ.

ທ່ານນະບີມຸຮໍາມັດ ໄດ້ກ່າວວ່າ:

"مَنْ حَلَفَ بِشَيْءٍ دُونَ اللَّهِ فَقَدْ أَشْرَكَ"

"ຜູ້ໃດໄດ້ສາບານຕໍ່ສິ່ງໜຶ່ງສິ່ງໃດ ດ້ວຍນາມອື່ນນອກຈາກອັລລໍຮ໌ ເຂົາຜູ້ນັ້ນໄດ້ເຮັດການ ຊີຣິກ

---

[1] ບັນທຶກໂດຍທ່ານອີມາມອະຫ໌ມັດ (5/ 428), ອັດ-ເຕາະບະຣໍນີ ໃນໜັງສືກະບີຣ (4/ 338), ແລະ ທ່ານໄບຮາກີໜັງສືຊູອັບ (14/ 355), ກ່າວໃນໜັງສື ມັອມັຈ ອັຊຊະວາອິດ (1/ 121), ລາຍງານຂອງອະຫ໌ມັດ ແລະ ຜູ້ລາຍງານຣະດີຊນີ້ ແລະ ຜູ້ລາຍງານຣະດີຊຊໍຣີຫ໌.

ແລ້ວ"[1] ລາຍງານໂດຍອິມາມອະຫ໌ມັດ ດ້ວຍສາຍລາຍງານທີ່ມີຄວາມໜ້າເຊື່ອຖືສູງ, ຈາກທ່ານອຸມັຣ ບິນ ອັລ-ຄັອດຕ໊ອບ ເຣາະດີຢັລລໍຮູອັນຮູ ແລະ ລາຍງານໂດຍ ອາບູ ດາວູດ, ອັດ-ຕິຣມີຊີ ດ້ວຍສາຍລາຍ ງານທີ່ມີຄວາມໜ້າເຊື່ອຖືສູງຈາກບົດລາຍງານ ຮະດີດອິບນຸ ອຸມັຣ ເຣາະດີຢັລລໍຮຸອັນຮູ ມາຈາກທ່ານນະບີມຸຮຳມັດ ໄດ້ກ່າວວ່າ:

"مَن حَلَفَ بِغَيْرِ اللهِ فَقَدْ كَفَرَ أَوْ أَشْرَكَ"

"ຜູ້ໃດກໍຕາມທີ່ໄດ້ສາບານດ້ວຍນາມອື່ນນອກຈາກອັລລໍຮ໌ ເຂົາຜູ້ນັ້ນໄດ້ຕົກເປັນຜູ້ປະຕິເສດສັດທາແລ້ວ ຫຼື ໄດ້ຕັ້ງພາຄີຕໍ່ພຣະອົງອັລລໍຮ໌ແລ້ວ"[2]

ແລະຄຳກ່າວຂອງທ່ານນະບີມຸຮຳມັດ ອີກວ່າ:

"لا تَقُولُوا: ما شَاءَ اللهُ وَشَاءَ فُلانٌ، وَلَكِنْ قُولُوا: ما شَاءَ اللهُ ثُمَّ شَاءَ فُلانٌ"

"ພວກເຈົ້າຈົ່ງຢ່າກ່າວຊື່ອັລລໍຮ໌ຄູ່ກັບຊື່ຜູ້ອື່ນວ່າ : ນີ້ຄືສິ່ງທີ່ອັລລໍຮ໌ ແລະ ຄົນ ໆ ນັ້ນຕ້ອງການໃຫ້ເກີດ, ແຕ່ຈົ່ງເວົ້າວ່າ: ນີ້ຄືສິ່ງທີ່ອັລລໍຮ໌ປະສົງໃຫ້ເກີດ ແລ້ວຄົນຄົນນັ້ນກໍ່ຕ້ອງການໃຫ້ເກີດເຊັ່ນດຽວກັນ"[3]

ບັນທຶກໂດຍ ອາບູດາວູດ ດ້ວຍສາຍລາຍງານທີ່ໜ້ານັບຖື ແລະ ເຊື່ອຖືໄດ້ ຈາກທ່ານຮຸໄຊຟະ ບິນ ອັລ ຍະມານ ເຣາະດີຢັລລໍຮຸອັນຮູ.

ຊີຣິກ ຈະນິດນີ້ ບໍ່ເຮັດໃຫ້ຕົກສາສະໜາ

---

1 ບັນທຶກໂດຍທ່ານອິມ່າມອະຫ໌ມັດ (1/ 47)

2 ບັນທຶກໂດຍທ່ານອາບຸດາວູດ ເລກທີ (3251) ແລະ ທີ່ຕິຣມີຊີ ເລກທີ (1535).

3 ບັນທຶກໂດຍທ່ານອາບຸດາວູດ ເລກທີ (4980) ແລະ ທ່ານອະຫ໌ມັດ (5/ 384).

ແລະບໍ່ເຮັດໃຫ້ຕ້ອງຕົກນາລິກຊ່ອນປິລັບດອນ
ແຕ່ວ່າມັນເປັນການສະແດງເຖິງການຂັດແຍ້ງຫຼືການປະຕິເ
ສດຕໍ່ຄວາມສົມບູນແບບຂອງຫຼັກການເຕົາຮີດທີ່ຖືກຕ້ອງ.

ສ່ວນປະເພດທີ່ ສາມ ຄື ຊີຣິກ ຄໍຟີ ຫຼື ການຕັ້ງພາຄີແບບເຊື່ອງໄວ້ໃນຈິດໃຈ
ຫຼັກຖານຈາກຄຳກ່າວຂອງທ່ານນະບີ- ຊັລລັລລໍຮຸ ອະໄລຮິ ວະສັລລໍາ- ວ່າ:

"أَلَا أُخْبِرُكُمْ بِمَا هُوَ أَخْوَفُ عَلَيْكُمْ عِندِي مِنَ الْمَسِيحِ الدَّجَّالِ؟" قَالُوا: بَلَى يَا رَسُولَ اللهِ، قَالَ: "الشِّرْكُ الخَفِيُّ، يَقُومُ الرَّجُلُ فَيُصَلِّي، فَيُزَيِّنُ صَلَاتَهُ لِمَا يَرَى مِنْ نَظَرِ الرَّجُلِ إِلَيْهِ".

"ຂ້ອຍຈະບອກພວກທ່ານເຖິງສິ່ງໜຶ່ງທີ່ຂ້ອຍຢ້ານຍິ່ງກວ່າ ອັດ-ດັນຍາລ ອີກ ເອົາບໍ່? ພວກເຂົາເຫຼົ່ານັ້ນກ່າວຕອບວ່າໄດ້ ທ່ານຣໍຊູລລຸລລໍຮ໌ ທ່ານຈຶ່ງກ່າວຕໍ່ໄປວ່າມັນຄືຊີຣິກ ຄໍຟີ ເຊັ່ນ: ແບບຢ່າງທີ່ຊາຍຄົນໜຶ່ງທີ່ຢືນຂຶ້ນລະຫມາດຢ່າງງົດງາມ ເພື່ອໃຫ້ຜູ້ຄົນສົນໃຈແນມເບິ່ງມາທາງເຂົາ"[1] ລາຍງານໂດຍ ອິມາມ ອະຫ໌ມັດໃນຕຳລາບັນທຶກຫາດິຊ ຈາກທ່ານ ອາບູ ສະອີດ ອັລ-ຄຸດຣີ ເຣາະດີຍັລລໍຮຸອັນຮູ .

ແລະ ອານຸຍາດໃຫ້ແບ່ງຊີຣິກ ຫຼື ການຕັ້ງພາຄີຕໍ່ອັລລໍຮ໌ ອອກເປັນສອງປະເພດເທົ່ານັ້ນ ຄື:

ຊີຣິກໃຫຍ່ ແລະ ຊີຣິກຍ່ອຍ (ນ້ອຍ) ສ່ວນຊີຣິກຄໍຟີ ນັ້ນມັນຄອບຄຸມຊີຣິກທັງຊີຣິກໃຫຍ່ແລະນ້ອຍ.
ໃນບ້າງເທື່ອຊີຣິກໃຫຍ່ ກໍເກີດຂຶ້ນແບບລີ້ລັບໄດ້ ເຊັ່ນ: ການຕັ້ງພາຄີຂອງບັນດາພວກຫນ້າຊື່ໃຈຄົດ, ຜູ້ຂີ້ຕົວະ,

---

[1] ບັນທຶກໂດຍທ່ານອິບນຸມາຈະຫ໌ ເລກທີ (4204) ແລະ ທ່ານອິມ່າມອະມັດ (3/ 30).

ເປັນຕົ້ນ
ເພາະພວກເຂົາເຫຼົ່ານັ້ນໄດ້ພະຍາຍາມປົດບັງຫຼັກຄວາມເຊື່ອຖື ທີ່ຫຼົງຜິດຂອງພວກເຂົາໂດຍໄດ້ສະແດງໃຫ້ເຫັນວ່າພວກເຂົາ ຍອມຮັບ ແລະ ປະຕິບັດຕາມອິສລາມຢ່າງໂອ້ອວດ ແລະ ຢ້ານວ່າອັນຕະລາຍຈະເກີດຂຶ້ນແກ່ພວກເຂົາ.

ແລະບາງເທື່ອ ລິຣິກເຄາະພີ ກໍ່ເກີດຂຶ້ນໄດ້ກັບ ລິຣິກ ອັສຂ້ອດ ຫຼື ລິຣິກຍ່ອຍ (ນ້ອຍ) ເຊິ່ງເກີດຂຶ້ນໃນກໍລະນີສະແດງຄວາມໂອ້ອວດເຊັ່ນ: ທີ່ມີປະກົດໃນຮາດິຊ ຫລັກຄວາມເຊື່ອທີ່ລາຍງານໂດຍທ່ານມະຫ໌ມູດ ບິນ ລະບີດ ອັລ-ອັນຊໍຣີ ທີ່ໄດ້ນໍາກ່າວໄວ້ຂ້າງເທິງ ແລະ ເປັນຮາດິຊຂອງ ອາບູ ສະອີດ ອັລ-ຄຸດຣີ. ແທ້ຈິ່ງອັລລໍຮ໌ເປັນຜູ້ລິງປະທານຄວາມສໍາເລັດ.

## ບົດຮຽນ ທີ່ ຫ້າ: ອັລ-ອິຫ໌ຊານ

ຄວາມໝາຍຂອງອິຫ໌ຊານ ຄື: “ການເຮັດຄວາມເຄົາລົບພັກດີຕໍ່ອັລລໍຮ໌ ປຽບຄືທ່ານໄດ້ເຫັນພຣະອົງ ແລະ ຫາກວ່າທ່ານບໍ່ເຫັນພຣະອົງ ແທ້ຈິງພຣະອົງກໍ່ເຫັນທ່ານ”.

## ບົດຮຽນທີ່ຫົກ: ເງື່ອນໄຂຂອງການລະຫມາດ

ສໍາຫລັບເງື່ອນໄຂຂອງການລະຫມາດມີ 9 ປະການດັ່ງນີ້:

1. ອັລ-ອິສລາມ (ເປັນຄົນທີ່ນັບຖືສາສະໜາອິສລາມ).
2. ອັລ-ອັກ (ການມີສະຕິປັນຍາ).
3. ອັດ-ຕັມຍີດ (ເດັກນ້ອຍ ແລະ ຢູ່ໃນໄວທີ່ສາມາດແຍກແຍະໄດ້ແລ້ວ)
4. ຣັອຟອຸລຫະດັດ (ການເຮັດຄວາມສະອາດ).

5. ອະຊາລະອັລບະຍາຊະ (ການຊຳລະລ້າງສິ່ງສົກກະປົກ).

6. ຊິດຣຸລ (ການປົກປິດອະໄວຍະວະທີ່ສະຫງວນຕາມທີ່ສາສະຫນາກຳຫນົດ).

7. ດຸຄູລ ອັລວັກຕຸ (ເຂົ້າເວລາທີ່ກຳຫນົດ).

8. ອິສຕິກບາລ ອັລກິບລະຮ໌ (ການຫັ່ນຫນ້າສູ່ທິດຕະເວັນຕົກ).

9. ການນຽດ (ຕັ້ງເຈດຕະນາ).

## ບົດຮຽນທີ່ເຈັດ: ຫຼັກການລະຫມາດ

ຫຼັກການຂອງການປະຕິບັດລະຫມາດມີ 14 ປະການດັ່ງນີ້:

1 . ການຢືນ ຫາກມີຄວາມສາມາດ.

2 . ການກ່າວ ອັລລໍຮ໌ ຮູອັກບັຣ.

3 . ການອ່ານອັລຟາຕິຫະຮ໌.

4 . ການໂຄ້ງຕົວ.

5 . ອິຕິດາລ (ການຢືນຕົວຕົງຫລັງຈາກໂຄ້ງຕົວ)

6 . ການກົມກາບ.

7 . ການເງີຍຫນ້າຂຶ້ນຈາກການກົມກາບ.

8 . ການລຸກຂຶ້ນນັ່ງລະຫວ່າງກົມກາບ.

9. ການສະຫງົບນິ້ງໄລຍະຫນຶ່ງ ໃນທຸກງທ່າ.

10. ຮຽງຕາມລຳດັບ.

11. ການກ່າວ ອັດຕະຮີຍາ ເທື່ອສຸດທ້າຍ.

12. ການນັ່ງກ່າວ ອັດຕະຮີຍາ ເທື່ອສຸດທ້າຍ.

13 .ການກ່າວສັນລະເສີນຕໍ່ທ່ານນາບີ ຊໍລັລລໍຮ໌ຮຸ ອະໄລຮິ ວະສັລລັມ.

14 . ການໃຫ້ສະລາມທັ້ງສອງເທື່ອ.

## ບົດຮຽນທີ່ແປດ : ຂໍ້ບັງຄັບຂອງການລະຫມາດ

ຂໍ້ບັງຄັບທີ່ຕ້ອງເຮັດໃນລະຫມາດມີ 8 ປະການດັ່ງນີ້:

1 . ການກ່າວ ອັລລໍຮ໌ຮູອັກບັຣ.

2. ການກ່າວຄໍາວ່າ: "ສາມິອັລລໍຮູ ລິມັນຮາມິດະ" ບໍ່ວ່າຈະລະຫມາດຕາມ ຫຼື ຄົນດຽວ.

3. ການກ່າວຄໍາວ່າ "ຣ໊ອບບະນາ ວະລາກັລຮັມ"

4. ການກ່າວຄໍາວ່າ "ສຸບຫານະ ຣ໊ອບບີຢັລ ອະຊີມ" ໃນຂະນະໂຄ້ງຕົວ.

5. ການກ່າວຄໍາວ່າ "ສຸບຫານະ ຣ໊ອບບີຢັລ ອະລາ" ໃນຂະນະກົ້ມກາບ.

6. ການກ່າວຄໍາວ່າ "ຣ໊ອບບິກ ຟິຣລີ" ໃນຂະນະນັ່ງລະຫວ່າງສອງກົ້ມກາບ.

7. ການກ່າວອ່ານ ອັດຕະຮີຢາ ເທື່ອທໍາອິດ.

8. ການນັ່ງເພື່ອອ່ານອັດຕະຮີຢາ ເທື່ອສຸດທ້າຍ.

## ບົດຮຽນທີ່ເກົ້າ : ການອ່ານ ອັດຕະຮີຢາ

ການກ່າວອ່ານອັດຕະຮີຢາຄື ການກ່າວອ່ານຂໍ້ປະໂຫຍກດັ່ງນີ້:

ຄໍາອ່ານ: ອັດຕະຮີຢາຕຸ ລິລລາຮີ , ວັສ ສໍລາວາຕຸ ວັສ ຕອຍຍິບາຕຸ, ອັສ ສະລາມຸ ອະໄລກາ ໂອຍຢູຮັລ ນະບີຢຸ ວະເຣາະມາຕຸລລໍຮີ ວະບະເຣາະກາຕຸ, ອັສສະລາມມຸ ອະໄລນາ ວະອະລາ ອິບາດິລລາຮີ ຊໍລີຮີນ ອັຊຮະດຸອັລລາ ອິລາຮະ ອິລລັລລໍຮ໌ , ວະອັຊຮະດຸ ອັນນະ ມຸຮໍາມະດັນ ອັບດຸຮູ ວະເຣາະຊູລຸຮ໌.

ຄໍາແປ: "ຄວາມເຄົາລົບ, ຄວາມພັກດີ ແລະຄຸນນະທໍາອີລະທັມທັ້ງຫລາຍ ເປັນສິດຂອງອັລລໍຮ໌

(ຫຼືຄວາມພັກດີ ຄືການເຮັດຄວາມດີທາງຄຳເວົ້າ ທາງກິລິຍາມາລະຍາດ ແລະທາງຈັບສິນທັ້ງຫລາຍເປັນສິດທິຂອງອັລລໍຮ໌ທັ້ງຫມົດ) ຂໍຄວາມສັນຕິສຸກ ຄວາມເມດຕາແຫ່ງອັລລໍຮ໌ ແລະຄວາມຈະເລີນແຫ່ງພຣະອົງຈົ່ງມີແດ່ທ່ານ ໂອ້ທ່ານນາບີ ຂໍຄວາມສັນຕິສຸກຈົ່ງມີແກ່ພວກເຮົາ ແລະແກ່ບັນດາບ່າວຜູ້ທີ່ມີຄຸນນະທຳແຫ່ງອັລລໍຮ໌, ຂ້ອຍຂໍປະຕິຍານຕົນວ່າບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຮ໌ ແລະ ມຸຮຳມັດນັ້ນ ເປັນບ່າວແລະສາດສະດາທູດຂອງພຣະອົງ".

ຫລັງຈາກນັ້ນກ່າວສັນລະເສີນທ່ານນະບີ ຊໍລລັລລໍຮ໌ຮຸ ອະໄລຮິ ວະສັລລັມ ດັ່ງນີ້: ຄຳອ່ານ: ອັລລໍຮ໌ຮຸມມາ ສໍລລິ ອະລາ ມຸຮຳມັດ ວະອາລາ ອາລີ ມຸຮຳມັດ ກະມາສໍລໄລຕະ ອະລາ ອິບຣໍຮີມ ວະ ອະລາ ອາລີ ອິບຣໍຮີມ ອິນນະກະ ຮະມີດ ດຸມ ມະຈີດ, ວະບາຣິກ ອະລາ ມຸຮຳມັດ ວະອະລາ ອາລີ ມຸຮຳມັດ ກະມາ ບາຣົອກຕະ ອະລາ ອິບຣໍຮີມ ວະອະລາ ອາລີ ອິບຣໍຮີບ ອິນນະກະ ຮະມີດຸນ ມະຍີດ.

ຄຳແປ: ໂອ້ ອັລລໍຮ໌ ໄດ້ໂປຼດເມດຕາ (ຫຼື ສັນລະເສີນຍົກຍ້ອງ) ມຸຮຳມັດ ແລະ ບໍລິວານຕະກູນຂອງມຸຮຳມັດ ຄືດັ່ງທີ່ໃຫ້ການສັນລະເສີນແກ່ ອິບຣໍຮີມ ແລະ ຄອບຄົວຂອງອິບຣໍຮີມ,

ໂອ້ ອັລລໍຮ໌ ຂໍພຣະອົງໄດ້ໃຫ້ເພີ່ມຄວາມຈະເລີນໃຫ້ແກ່ມຸຮຳມັດ ແລະ ບໍລິວານຕະກູນຂອງມຸຮຳມັດ ຄືດັ່ງທີ່ໃຫ້ຄວາມຈະເລີນໃຫ້ແກ່ອິບຣໍຮີມ ແລະ

ຄອບຄົວຂອງອິບຣໍຮີມ
ແທ້ຈິງພຣະອົງເປັນພຣະເຈົ້າທີ່ຄູ່ຄວນການສັນລະເສີນໃຫ້ກຽ
ດ.

ຕໍ່ຈາກນັ້ນ ໃຫ້ຂໍຄວາມຄຸ້ມຄອງຈາກອັລລໍຮ໌ ໃນລະຫວ່າງອັດຕະຮິຍາ ຕອນສຸດທ້າຍ, ຂໍໃຫ້ຫຼຸດພົ້ນຈາກການທໍລະມານໃນນາລົກ, ການທໍລະມານໃນລຸມຝັງສົບ, ການທີ່ທົດສອບ ຫຼື ສິ່ງບໍ່ດີມີການໃຊ້ຊີວິດ ແລະ ການຕາຍ ແລະ ໃຫ້ຫຼຸດພົ້ນຈາກການທົດສອບ ຫຼື ສິ່ງບໍ່ດີຂອງດັດຢານ ແລ້ວໃຫ້ເລືອກອ່ານດູອາທີ່ດີຕາມທີ່ປາດຖະນາໂດຍສະເພາະດູອາທີ່ມີແບບສະບັບຈາກທ່ານນາບີ ຊໍລລັລລໍຮ໌ຮຸອະໄລຮິວະສັລລັມ ເຊັ່ນ:

ຄຳອ່ານ: ອັລລໍຮ໌ຮຸມມາ ອະອິນນີ ອະຣາ ຊິກຣິກະ ວະຊຸກຣິກະ ວະ ຫຸສນີ ອິບາດະຕິກ, ອັລລໍຮ໌ຮຸມະ ອິນນີ ຊໍລັມຕຸ ນັຊຊີ ຊຸລມັນ ກະຊີຣໍ ວະ ລາຍັກຟິຣຸຊ ຊຸນູບະ ອິລລາ ອັນຕະ ຟັກຟິຣລີ ມັກຟິເຣາະຕັນ ມິນ ອິນດິກ, ວັຣຫັມນີ ອິນນະກະ ອັນຕັລ ກໍຟູຣຸຣ ເຣາະຮີມ.

ຄຳແປ: ໂອ້ອັລລໍຮ໌ ຂໍພຣະອົງໄດ້ໂປດຊ່ວຍໃຫ້ຂ້າພະເຈົ້າໄດ້ມີການລະນຶກຄິດເຖິງພຣະອົງ ຂອບໃຈຕໍ່ພຣະອົງ ແລະ ຄວາມງົດງາມໃນການພັກດີຕໍ່ພຣະອົງ ໂອ້ ອັລລໍຮ໌ ແທ້ຈິງແລ້ວ ຂ້ອຍ (ບ່າວ) ໄດ້ເຮັດຄວາມບໍ່ເປັນທັມ ໃຫ້ແກ່ຕົວເອງຢ່າງຫລວງຫລາຍ ແລະ ບໍ່ມີໃຜສາມາດໃຫ້ອະໄພໄດ້ນອກຈາກພຣະອົງອັລລໍຮ໌ ດັ່ງນັ້ນຂໍໄດ້ໂປດອະໄພໃຫ້ແກ່ບ່າວໂດຍການໃຫ້ອະໄພໂທດຈາກພຣະອົງ ແລະ ໄດ້ໂປດເມດຕາຕໍ່ບ່າວດ້ວຍ

ແນ່ນອນວ່າພຣະອົງເປັນຜູ້ໃຫ້ອະໄພທີ່ສຸດ ຜູ້ທີ່ມີຄວາມເມດຕາທີ່ສຸດ .

ສຳຫລັບໃນອັດຕະຣິຍາຕອນທຳອິດນັ້ນ ຫລັງຈາກກ່າວຄຳປະຕິຍານຕົນ ຫຼື ຄຳກ່າວ ຈະຣາດະຫ໌ນັ້ນແລ້ວໃຫ້ລຸກຂຶ້ນຢືນເພື່ອລະຫມາດ ຣືອກອະທີ່ສາມຕໍ່ໃນເວລາ ລະຫມາດຊຸຫ໌ຣິ, ລະຫມາດອັສຣິ, ລະຫມາດມັກກະຣິບ, ແລະ ລະຫມາດອີຊາ

ແລະ ຫາກທ່ານຈະກ່າວສັນລະເສີນໃຫ້ແກ່ທ່ານນາບີ ຊໍລລັລລໍຮ໌ຣຸ ອະໄລຣິ ວະສັລລັມ ຫລັງອັດຕະຣິຍາທຳອິດກໍ່ເປັນການດີກວ່າ ເນື່ອງຈາກມີຫຼັກຖານຢືນຢັນຈາກຮະດີດທີ່ວໄປກ່ຽວກັບເລື່ອງນີ້ ຈາກນັ້ນທ່ານກໍລຸກຂຶ້ນຢືນລະຫມາດຣືອກອະຫ໌ທີ່ສາມຕໍ່ໄປ.

## ບົດຮຽນທີສິບ : ແບບຢ່າງຂອງການລະຫມາດ (ຊຸນນະຂອງການລະຫມາດ).

ແບບຢ່າງຂອງການລະຫມາດມີດັ່ງນີ້:

1. ການກ່າວດູອາ ອັລ-ອິຟຕິຕະຫ໌. (ເປີດການລະຫມາດ)

2. ວາງມືຂວາທັບມືຊ້າຍຢູ່ເທິງກາງເອິກໃນຂະນະຢູ່ທ່າຢືນກ່ອນ ແລະ ຫລັງໂຄ້ງຕົວ.

3. ຍົກມືທັ້ງສອງ ໂດຍແບຜ່າມື ແລະ ໃຫ້ນີ້ວມືຕິດກັນຍົກໃຫ້ສູງລະດັບບ່າໄຫຼ່ ຫຼື ໃບຫູທັງສອງເບື້ອງໃນຂະນະຕັກບີຣເທື່ອທຳອິດ ຂະນະຕັກບີຣຈະໂຄ້ງຕົວ ແລະ ຕອນເງີຍຫນ້າຂຶ້ນຈາກການໂຄ້ງຕົວ ແລະ ໃນຕອນຕັກບີຣເພື່ອຢືນຂຶ້ນຈາກອັດຕະຣິຍາເທື່ອທຳອິດເພື່ອລະຫມາດຕໍ່ໃນຣືອກອັດທີ່ສາມ.

4. ກ່າວດູອາໃຫ້ຫລາຍກວ່າຫນຶ່ງເທື່ອໃນລະຫວ່າງໂຄ້ງຕົວ

(ມືຈັບຫົວເຂົ່າ) ແລະ ຕອນກົ້ມກາບ.

5. ກ່າວດູອາອື່ນນອກຈາກຄຳວ່າ "ຣ໊ອບບະນາ ລະກັລ ຮັມດຸ" ຫລັງຈາກທີ່ຢືນຂຶ້ນຈາກການໂຄ້ງຕົວ ແລະການຂໍດູອາອະໄພໂທດຫລາຍກວ່າຫນຶ່ງເທື່ອໃນຂະນະນັ່ງລະຫວ່າງກົ້ມກາບ (ສຸຍູດ) ທັ້ງສອງ.

6. ເຮັດໃຫ້ຫົວ(ສີສະ)ສະເຫມີກັບຫລັງໃນຕອນໂຄ້ງຕົວ.

7. ການເຮັດໃຫ້ຕົ້ນແຂນທັ້ງສອງອອກຫ່າງຈາກສີຂ້າງແລະ ແລະໃຫ້ຫນ້າທ້ອງຫ່າງອອກຈາກຂາອ່ອນແລະແຍກຂາອ່ອນໃຫ້ຫ່າງຈາກຫນ້າແຂ່ງໃນຕອນກົ້ມກາບ.

8. ຍົກແຂນທັງສອງໃຫ້ເຫນືອລະດັບພື້ນໃນຂະນະຕອນກົ້ມກາບ.

9. ນັ່ງເທິງຕີນຊ້າຍ ແລະໃຫ້ຕີນຂວາຕັ້ງຍັນພື້ນໃນຂະນະຕອນທີ່ນັ່ງ ອັດຕະຮີຍາທຳອິດ ແລະໃນຂະນະນັ່ງລະຫວ່າງສອງທີ່ກົ້ມກາບ.

10. ນັ່ງພັບຂາທັງສອງເບື້ອງໄປໃນທາງດຽວກັນ (ພັບພຽບ) ໃນອັດຕະຮີຍາ ສຸດທ້າຍຂອງການລະຫມາດທີ່ມີສີ່ແລະສາມຣ໊ອກອະ ຄືນັ່ງກົ້ນຕິດພື້ນໂດຍໃກ້ຕີນເບື້ອງຊ້າຍຢູ່ລຸ່ມຕີນຂວາ ປາຍຕີນເບື້ອງຂວາຍັນພື້ນໄວ້.

11. ຊີ້ດ້ວຍນິ້ວຊີ້ລະຫວ່າງອັດຕະຮີຍາທຳອິດ ແລະ ອັດຕະຮີຍາເທື່ອທີ່ສອງ ຕັ້ງແຕ່ເລີ່ມນັ່ງຈົນຈົບ ແລະໃຫ້ກະດິກນິ້ວຊີ້ໃນລະຫວ່າງການກ່າວຂໍດູອາ.

12. ກ່າວສໍລະວາດ ແກ່ທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລັມ ແລະ ຄອບຄົວຂອງທ່ານ ແລະ ແກ່ນະບີອິບຣໍຮີມ

ແລະ ຄອບຄົວຂອງທ່ານ ລະຫວ່າງອັດຕະຮີຍາທຳອິດ .

13. ການຂໍດູອາຫລັງອັດຕະຮີຍາ ສຸດທ້າຍ.

14. ການອ່ານອອກສຽງດັງໃນລະຫມາດ ສຸບຮີ ລະຫມາດຮ່ວມຫລາຍຄົນ, ລະຫມາດອີດ, ລະຫມາດຂໍຝົນ, ແລະໃນສອງຣືອກອະທຳອິດຂອງລະຫມາດມັກກະຣິບ ແລະ ອີຊາ.

15. ການອ່ານສຽງເບົາ (ຄ່ອຍ) ໃນລະຫມາດຊຸຫ໌ຣີ, ລະຫມາດອັສຣີ, ສອງຣືອກອະທີ່ສາມຂອງມັກກະຣິບ ແລະ ສອງຣືອກອະສຸດທ້າຍຂອງລະຫມາດອີຊາ.

16. ອ່ານຊູເຣາະອື່ນນອກເຫນືອຈາກອັລຟາຕະຫະຮ໌, ພ້ອມງກັບເອົາໃຈໃສ່ແບບຢ່າງອື່ນ ໆ ນອກຈາກທີ່ເຮົາໄດ້ກ່າວໄວ້ໃນການລະຫມາດ ເຊັ່ນ: ສ່ວນທີ່ເກີນໄປຈາກຄຳກ່າວວ່າ: ຣັອບບະນາ ວະລະກັລຫັມດຸ ສຳຫລັບຜູ້ທີ່ເປັນອິມາມ (ຜູ້ນຳລະຫມາດ) ຫຼື ຄົນຕາມ (ມະມູມ) ຫຼືຜູ້ທີ່ລະຫມາດຄົນດຽວ ເມື່ອເງີຍຫນ້າຂຶ້ນຈາກການໂຄ້ງຕົວ ເພາະມັນເປັນແບບຢ່າງ ແລະ ເຊັ່ນດຽວກັນ ການວາງຝ່າມືໄວ້ເທິງຫົວເຂົ່າໂດຍກາງນິ້ວມືອອກໃນຂະນະຕອນໂຄ້ງຕົວ (ຣຸກົວະ).

## ບົດຮຽນທີ່ ສິບເອັດ: ສິ່ງທີ່ເຮັດໃຫ້ລະຫມາດເສຍ

ການກະທຳທີ່ສົ່ງຜົນໃຫ້ການລະຫມາດເສຍມີ 8 ປະການດັ່ງນີ້:

1. ຕັ້ງໃຈເວົ້າ ໂດຍທີ່ເຂົາຮູ້ດີ ສ່ວນຜູ້ທີ່ລືງລືມຫຼືບໍ່ຮູ້ການລະຫມາດຂອງເຂົາຖືວ່າໃຊ້ໄດ້.

2. ການຫົວ (ຫົວອອກສຽງດັງ).

3. ການກົ້ມ.

4. ການດົ່ມ.

5. ການເປີດເອົາເອາະຫ໌ (ອະໄວຍະວະທີ່ຕ້ອງປົກປິດແລະສະຫງວນ).

6. ການຫັ່ນອອກຈາກທິດຂອງກິບລະຈົນເກີນໄປ.

7. ການຫລິ້ນ ຫຼື ເຄື່ອນໄຫວຫລາຍໆຕິດຕໍ່ກັນ.

8. ການເສຍນ້ຳລະຫມາດ.

## ບົດຮຽນທີ່ ສິບສອງ :
## ເງື່ອນໄຂຂອງການອາບນ້ຳລະຫມາດ

ການອາບນ້ຳລະຫມາດ ມີເງື່ອນໄຂຢູ່ 10 ປະການ ຄື:

1. ຕ້ອງເປັນຜູ້ນັບຖືສາສະຫນາອິສລາມ.

2. ຕ້ອງມີສະຕິປັນຍາຄົບຖ້ວນ.

3. ມຸໄມຍິຊ ຄືເດັກນ້ອຍທີ່ພົ້ນໄວ້ເດັກນ້ອຍ ແລະ ສາມາດຈຳແນກແຍກຄວາມແຕກຕ່າງໄດ້.

4. ການນຽດ ຫຼືຕັ້ງເຈດຕະນາ.

5. ຕ້ອງນຶກຄິດ ຫຼື ຕັ້ງໃຈ ເຮັດແບບຕໍ່ເນື່ອງໂດຍບໍ່ມີເຈດຕະນາວ່າຈະຫຍຸດເຮັດຈົນກວ່າຈະເສຍນ້ຳລະຫມາດ.

6. ຕ້ອງບໍ່ມີສິ່ງທີ່ເຮັດໃຫ້ເສຍນ້ຳລະຫມາດ ເຊັ່ນ: ໂດຍແມ່ນກຳລັງໄປເບົາ (ຍ່ຽວ) ຄືບໍ່ອະນຸຍາດໃຫ້ອາບນ້ຳລະຫມາດໃນເວລາທີ່ກຳລັງຍ່ຽວເປັນຕົ້ນ.

7. ຕ້ອງມີການລ້າງຮ່າງກາຍໃຫ້ສະອາດຈາກການຖ່າຍຫນັກ, ຖ່າຍເບົາ ກ່ອນທີ່ຈະອາບນ້ຳລະຫມາດ.

8. ຕ້ອງໃຊ້ນ້ຳທີ່ສະອາດ ແລະ ໄດ້ຮັບການອະນຸຍາດໃຫ້ໃຊ້.

9. ກຳຈັດສິ່ງກີດກັ້ນບໍ່ໃຫ້ນ້ຳລະຫມາດເຂົ້າເຖິງຜິວຫນັງ.

10. ການເຂົ້າເວລາລະຫມາດ.

## ບົດຮຽນທີ່ ສິບສາມ :
## ຂໍ້ບັງຄັບຂອງການອາບນ້ຳລະຫມາດ

ສຳຫລັບເງື່ອນໄຂຂໍ້ບັງຄັບຂອງການອາບນ້ຳລະຫມາດມີ 6 ປະການດັ່ງນີ້:

1. ລ້າງຫນ້າ ພ້ອມກັບການບ້ວນປາກ ແລະ ສູດນ້ຳເຂົ້າຫູດັງ,

2. ລ້າງມືທັງສອງຮອດຂໍ້ສອກທັງສອງເບື້ອງ,

3. ລູບນ້ຳທົ່ວເສັ້ນຜົມພ້ອມໃບຫູທັງສອງ,

4.ລ້າງຕີນໃຫ້ຮອດຕາຕຸ່ມທັງສອງ,

5. ປະຕິບັດຕາມລຳດັບຂັ້ນຕອນ,

6. ປະຕິບັດຕາມຂັ້ນຕອນຢ່າງຕໍ່ເນື່ອງ.

ແລະ ມີສຸນນະຫ໌ໃຫ້ລ້າງໃບຫນ້າ ມື ແລະ ຕີນສາມຄັ້ງ ໃນສ່ວນຂອງການບ້ວນປອກ ແລະ ສູດນ້ຳເຂົ້າຫູດັງກໍ່ໃຫ້ເຮັດສາມຄັ້ງເຊັ່ນດຽວກັນ ແຕ່ວ່າກົດເກນ ແລະ ຂໍ້ບັງຄັບທາງສາສະຫນາບັນຍັດໃຫ້ເຮັດເທື່ອດຽວເທົ່ານັ້ນ ສ່ວນການເຊັດຜົມນັ້ນບໍ່ມີສຸນນະຫ໌ໃຫ້ເຊັດຫຼາຍເທື່ອ ດັ່ງທີ່ມີປະກົດຢູ່ໃນຫະດີຊຊໍຮີຫ໌.

## ບົດຮຽນທີ່ ສິບສີ່ : ສິ່ງທີ່ເຮັດໃຫ້ເສຍນ້ຳລະຫມາດ

ສຳຫລັບສິ່ງທີ່ເຮັດໃຫ້ເສຍນ້ຳລະຫມາດນັ້ນມີ 6 ປະການດັ່ງນີ້:

1. ມີສິ່ງທີ່ອອກມາຈາກທາງຮູທະວານທັງສອງ.

2. ມີນະຍົດ ສິ່ງສົກກະປົກອອກຈາກຮ່າງກາຍ.

3. ຂາດສະຕິໂດຍການນອນ ຫຼື ສິ່ງອື່ນໆນອກຈາກນັ້ນ.

4. ສໍາພັດອະໄວຍະວະເພດດ້ວຍມືບໍ່ວ່າຈະເປັນທະວານເບົາຫຼືຮູທະວານໜັກໂດຍບໍ່ມີສິ່ງປິດກັ້ນ.

5. ກິນຊີ້ນອູດ.

6. ການຕົກຈາກສາສະໜາ ຫຼື ມຸຣຕັດ ຂໍໃຫ້ພຣະອົງອັລລໍຣ໌ປົກປ້ອງຄຸ້ມຄອງບັນດາມຸສລິມ ໂດຍທົ່ວໜ້າກັນຈາກສິ່ງນັ້ນນໍາ.

ຂໍ້ສັງເກດທີ່ສໍາຄັນ: ສໍາຫລັບການອາບນໍ້າໃຫ້ຄົນທີ່ຕາຍ (ສົບ) ນັ້ນ ທີ່ຕາມແບບຢ່າງຖືກຕ້ອງນັ້ນ ຖືວ່າບໍ່ເຮັດໃຫ້ເສຍນໍ້າລະຫມາດເຊິ່ງເປັນຄວາມເຫັນຂອງບັນດານັກວິຊາການຜູ້ຮູ້ສ່ວນໃຫຍ່ ເນື່ອງຈາກບໍ່ມີຫຼັກຖານຢືນຢັນເຖິງການເສຍນໍ້າລະຫມາດ ນອກຈາກມືຂອງເຂົາໄປຖືກ ຫຼື ສໍາພັດອະໄວຍະວະຂອງສົບໂດຍຕຣົງ (ບໍ່ມີຜ້າກັ້ນ) ເຂົາຈໍາເປັນຕ້ອງນໍ້າລະຫມາດໃຫມ່.

ທີ່ຈໍາເປັນກໍຄືລາວບໍ່ຄວນສໍາພັດ ຫຼື ແຕະຕ້ອງອະໄວຍະວະຂອງຜູ້ຕາຍນອກຈາກມີຜ້າກັນ ໃນທໍານອງດຽວກັນກັບການແຕະຕ້ອງ ຫຼື ສໍາພັດເພດຫຍິງ ຊຶ່ງບໍ່ເຮັດໃຫ້ເສຍນໍ້າລະຫມາດ ບໍ່ວ່າການກະທໍາແບບນັ້ນຈະເຮັດດ້ວຍອາລົມຄຶດຮອດ ຫຼື ບໍ່ ຕາມທັດສະນະທີ່ຖືກຕ້ອງທີ່ສຸດລະຫວ່າງສອງທັດສະນະຕາບໃດທີ່ບໍ່ມີການຫຼັ່ງນໍ້າອະສຸຈິອອກຈາກອະໄວຍະວະເພດ ເນື່ອງຈາກທ່ານນະບີ ຊໍລລັລລໍຮ ຮຸອະໄລຮິ ອະສັລລັມ

ເຄີຍຈູບບັນດາເມຍຂອງທ່ານບາງຄົນ
ແລ້ວໄປລະຫມາດໂດຍບໍ່ໄດ້ອາບນ້ຳລະຫມາດໃຫມ່ອີກຮອບ.

ສ່ວນຄຳລັດຂອງພຣະອົງອັລລໍຮ໌ວ່າໃນຊູເຣາະຫ໌ ອັນ-ນິສາ ໂອງການທີ່ 43, ແລະ ຊູເຣາະຫ໌ ອັລ-ມາອິດະ ໂອງການທີ່ 6, ທີ່ວ່າ:

﴿...أَوۡ لَٰمَسۡتُمُ ٱلنِّسَآءَ...﴾

ຄວາມວ່າ : "ຫຼືພວກເຈົ້າໄດ້ສຳຜັດກັບຜູ້ຍິງ" (ຊູເຣາະຫ໌ ອັນ-ນິສາ ໂອງການທີ່ 43) (ຊູເຣາະຫ໌ ອັລ-ມາອິດະ ໂອງການທີ່ 6) ຄວາມຫມາຍດັ່ງກ່າວຄື ການແຕ່ງງານ ຕາມທັດສະນະຄວາມຄິດເຫັນທີ່ຖືກຕ້ອງທີ່ສຸດຂອງນັກວິຊາການອິສລາມ ເຊັ່ນທ່ານ ອິບນຸ ອັບບາສ ເຣາະດີຍັລລໍຮຸອັນຮຸມາ ແລະ ບັນດາຄະນະນັກວິຊາການທັງລຸ້ນກ່ອນແລະລຸ້ນຕໍ່ມາ ຂໍຄວາມສັນຕິສຸກຈົ່ງມີແກ່ທ່ານທັ້ງຫລາຍເຫຼົ່ານັ້ນ. ແທ້ຈິງ ອັລລໍຮ໌ເປັນຜູ້ສ້າງ ແລະ ໃຫ້ຄວາມສຳເລັດ.

## ບົດຮຽນທີ່ ສິບຫ້າ :

## ການມີຄຸນລັກສະນະນິໄສຕາມທີ່ເປັນບົດຄວາມສັ່ງສອນສຳຫລັບມຸສລິມທຸກຄົນ

ການມີຄຸນລັກສະນະນິໄສ ທີ່ງົດງາມ ຕາມບົດຄຳສັ່ງສອນສຳຫລັບມຸສລິມທຸກຄົນ ເຊັ່ນ: ການມີສັດຈະທັມ, ມີຄວາມຊື່ສັດບໍລິສຸດ, ການສະຫງວນ ແລະປົກປ້ອງອາໄວຍະວະເພດ, ການມີຄວາມລະອາຍອາຍ, ການເປັນຄົນກະກ້າຫານ, ການມີໃຈເມດຕາປານີ, ເມດຕາກະລຸນາ, ຮັກສາຄຳຫມັ້ນສັນຍາ, ການຮັກສາຕົນໃຫ້ມີຄວາມບໍລິສຸດຈາກບັນດາຂໍ້ຫ້າມຕ່າງໆຂ

ອງອັລລໍຣ໌, ມີການຕອບຮັບທີ່ດີ, ຊ່ວຍເຫຼືອເກື້ອກູນຄົນທຸກຍາກຕາມສະພາບຂອງຕົນ, ແລະປະຕິບັດຄຸນສົມມບັດແບບອື່ນ ໆ ທີ່ປະກົດເປັນບົດຄຳສັ່ງໃນຄຳພີ ແລະ ແບບຢ່າງຂອງທ່ານນະບີ.

## ບົດຮຽນທີ່ ສິບຫົກ :

## ການມີມາລະຍາດແບບອິສລາມ

ສ່ວນໜຶ່ງຂອງການມີມາລະຍາດທີ່ດີງາມໃນອິສລາມມີດັ່ງນີ້ :

1. ການກ່າວໃຫ້ສະລາມ.
2. ການເຮັດໜ້າຍິ້ມແຍ້ມແຈ່ມໃສ່.
3. ການກິນ ແລະ ດື່ມດ້ວຍການໃຊ້ມືຂວາ.
4. ການກ່າວ ບິສມິລລາຮ໌ ຕອນເລີ່ມຕົ້ນ.
5. ການກ່າວ ອັລຮັມດູລິລລາຮ໌ ຕອນເຮັດສຳເລັດແລ້ວ.
6. ການກ່າວ ອັລຮັມດູລິລລາຮ໌ ຕອນຈາມ.
7. ການກ່າວວ່າ "ຍັຮຮັມມຸກັລລໍຮ໌" ເມື່ອຫາກໄດ້ຍິນຄົນຈາມກ່າວ "ອັລຮັມດູລິລລາຮ".
8. ການໄປຢ້ຽມຍາມຜູ້ເຈັບປ່ວຍ.
9. ການລະຫມາດຍະນາຊະຫ໌ (ການລະມາດຄົນຕາຍ) ແລະ ຮ່ວມຕິດຕາມເອົາສົບໄປຝັງ.
10. ບົດຄຳສັ່ງທີ່ກ່ຽວຂ້ອງກັບມາລະຍາດການເຂົ້າມັສຍິດ.
11. ການອອກຈາກເຮືອນ.
12. ໃນຂະນະເດີນທາງ.
13. ຄວາມສຳພັນຕໍ່ພໍ່ແມ່.

14. ຄວາມສຳພັນຕໍ່ຍາດພີ່ນ້ອງ.

15. ກັບເພື່ອນບ້ານ.

16. ກັບຜູ້ໃຫຍ່ແລະເດັກນ້ອຍ.

17. ການສະແດງຄວາມຍິນດີເມື່ອເດັກນ້ອຍເກີດໃໝ່.

18. ການອວຍພອນງານແຕ່ງງານ.

19. ການປອບໃຈ ແລະ ສະແດງຄວາມເສຍໃຈຕໍ່ເຫດການຮ້າຍແຮງທີ່ເກີດຂຶ້ນກັບຜູ້ອື່ນ.

20. ແລະ ມາລະຍາດອື່ນ ໆ ຈາກນັ້ນເປັນຕົ້ນບໍ່ວ່າການນຸ່ງຫົ່ມການຖອດເສື້ອຜ້າແລະການໃສ່ເກີບ.

## ບົດຮຽນທີ່ ສິບເຈັດ : ຂໍຕັກເຕືອນໃຫ້ອອກຫ່າງຈາກການຕັ້ງພາຄີ ຫຼື ຊິຣິກ ແລະ ການຜ່າຝືນຕ່າງ ໆ

ມຸສລິມ ຈຳເປັນຕ້ອງລະມັດລະວັງ ຕັກເຕືອນເຊິ່ງກັນແລະກັນໃຫ້ຫ່າງອອກຈາກການຕັ້ງພາຄີຕໍ່ພຣະອົງອັລລໍຮ໌ ຫຼືປະຕິບັດການຜ່າຝືນຕໍ່ຄຳສັ່ງແລະຂໍ້ບັງຄັບຂອງພຣະອົງເປັນຕົ້ນເຊັ່ນ: ປະພຶດຜິດທີ່ເປັນເຫດແຫ່ງການເສຍຫາຍທັງເຈັດ (ອັສ-ສັບອຸ ອັລ-ມູບິກອດ) ຄືການຕັ້ງພາຄີຕໍ່ອັລລໍຮ໌, ການເຮັດໄສຍະສາດສາດ, ການຂ້າເພື່ອນມະນຸດໂດຍບໍ່ສົມຄວນຂ້າ, ການກິນດອກເບ້ຍ, ການຍຶດເອົາສົມບັດຂອງເດັກກຳພ້າ, ການນີ້ອອກຈາກສົງຄາມ ແລະ ການກ່າວຫາຍິງຜູ້ສັດທາທີ່ຍັງເປັນຜູ້ບໍລິສຸດວ່າຜິດປະເວນີ.

ແລະເຊັ່ນດຽວກັນກັບການອັກກະຕັນຍູຕໍ່ພໍ່ແມ່ (ບິດາມານດາ), ການຕັດຂາດຍາດພີ່ນ້ອງ, ການເປັນພະຍານເທັດ, ການສ້າງຄວາມເດືອດຮ້ອນໃຫ້ພີ່ນ້ອງເຮືອນໃກ້ຄຽງ, ສ້າງຄວາມອະທຳໃຫ້ເກີດຂຶ້ນຕໍ່ເລືອດເນື້ອ, ລັບສິນຊື່ສຽງແລະກຽດຕິຍົດຂອງເພື່ອນມະນຸດ ,ດື່ມສຸລາເມົາຢາ ,ຫຼີ້ນການພະນັນ ,ເວົ້າຈາສຽດສີນິນທາປ້າຍຮ້າຍຜູ້ອື່ນ ແລະກິດຂໍ້ຫ້າມອື່ນທີ່ພຣະອົງອັລລໍຮ໌ ແລະ ທ່ານນະບີ ຊໍລັລໍຮຸ ອະໄລຮິ ວະສັລລັມ ໄດ້ມີຄຳສັ່ງຫ້າມໄວ້.

## ບົດຮຽນທີ່ ສິບແປດ : ການກະກຽມສົບ (ໄມຍິດ) ແລະ ການລະຫມາດຈະນາຊະຫ໌ (ລະຫມາດຄົນຕາຍ)

ມີລາຍລະອຽດສຳຫລັບເລື່ອງກະກຽມໄມຍິດ (ສົບ) ດັ່ງນີ້ :

ປະການທຳອິດນັ້ນຄື: ການສອນໃຫ້ເຂົາກ່າວວ່າ : ລາອິລາຮະ ອິລລັລລໍຮ໌ - ບໍ່ມີພະເຈົ້າອື່ນໃດສົມຄວນແກ່ການເຄົາລົບພັກດີນອກຈາກອັລລໍຮ໌ ດັ່ງທີ່ທ່ານນາບີ ຊໍລັລລໍຮຸ ອະໄລຮິ ວະສັລລັມ ໄດ້ເຄີຍກ່າວວ່າ

"لَقِّنُوا مَوْتَاكُمْ: لَا إِلَهَ إِلَّا اللَّهُ".

"ພວກເຈົ້າຈົ່ງສອນຕັສກີນແກ່ຜູ້ທີ່ໃກ້ຈະສິ້ນລົມຫາຍໃຈຈາກພວກເຈົ້າໄປວ່າ ລາອິລາຮະ ອິລລັລລໍຮ໌ "[1]

[1] ບັນທຶກໂດຍທ່ານມຸສລິມ ເລກທີ (916-917).

ລາຍງານໂດຍອິມາມມຸສລິມ, ສ່ວນຄວາມຫມາຍຂອງຄຳວ່າ " ເມົາຕາ" ໃນຣະດິດນີ້ຫມາຍເຖິງ "ຜູ້ໃກ້ຈະສິ້ນລົມຫາຍໃຈ" ນັ້ນຄືບັນດາຜູ້ທີ່ມີສັນຍານໃຫ້ເຫັນເຖິງການຕາຍໄດ້ມາສູ່ພວກເຂົາແລ້ວ.

**ປະການທີ່ສອງ:**

**ເມື່ອແນ່ໃຈວ່າຄວາມຕາຍໄດ້ມາຮອດລາວແລ້ວ ຄືສິ້ນຊີບລົງຢ່າງແນ່ໃຈ ໃຫ້ລົດເປືອກຕາທັງສອງຂອງລາວ ລົງປິດສະນິດ** ແລະ ຈັດເຄຣົາຂອງລາວ ຕາມທີ່ປະກົດຫຼັກຖານໃນສຸນນະຫ໌.

**ປະການທີ່ສາມ: ຈັດການອາບນ້ຳໃຫ້ໄມຍິດ ຫຼື ສົບທີ່ເປັນມຸສລິມ ນອກຈາກວ່າລາວ ເສຍຊີວິດໃນສະພາບຂອງຊະຮີດ ເຊັ່ນ ການຕາຍໃນສະນາມຮົບ**

ເຊິ່ງບໍ່ຈຳເປັນຕ້ອງອາບນ້ຳ ຫຼື ລະຫມາດໃຫ້ແກ່ລາວ ແຕ່ວ່າໃຫ້ນຳໄປຝັງພ້ອມເສື້ອຜ້າທີ່ລາວສວມໃສ່ຢູ່ ໂດຍບໍ່ຕ້ອງປ່ຽນ ເພາະທ່ານນະບີ ຊັລລັລລໍຮຸ ອະໄລຮິ ອະສັລລໍາ ບໍ່ໄດ້ອາບນ້ຳ ແລະ ລະຫມາດໃຫ້ໄມຍິດໃດທີ່ຕາຍໃນສະນາມຮົມອຸຫຸດ.

## ປະການທີ່ສີ່ : ລັກສະນະຂອງການອາບນ້ຳໃຫ້ຜູ້ຕາຍ (ສົບ).

ການອາບນ້ຳໄມຍິດ ຈະຕ້ອງມີການປົກປິດເອົາເຣາະ "ຮ່າງກາຍ" ຂອງຜູ້ຕາຍ

ແລ້ວໃຫ້ຍົກຫົວຂອງເຂົາເລັກນ້ອຍເພື່ອລີດທ້ອງຂອງລາວຄ່ອຍໆ ດ້ວຍຄວາມອ່ອນໂຍນ ຜູ້ທີ່ເຮັດການອາບນ້ຳໄມຍິດຄວນໃຊ້ຜ້າພັນມື ຫຼື ໃສ່ຖົງມືຢາງເພື່ອເປັນການປ້ອງກັນເຊື້ອພະຍາດ ແລ້ວຈຶ່ງອາບນ້ຳລະຫມາດໃຫ້ລາວ ລ້າງຫົວ ແລະ ຫນວດເຄົາຂອງເຂົາດ້ວຍນ້ຳລ່າ ແລະ ນ້ຳທີ່ປະສົມໃບພຸດຊາ ຫຼື ໃບອື່ຫຍັງກໍ່ໄດ້ທີ່ຄາຍຄືກັບເຊິ່ງກໍ່ສາມາດໃຊ້ໄດ້ ຈາກນັ້ນໃຫ້ລ້າງລຳຕົວດ້ານຂວາຕາມດ້ວຍດ້ານຊ້າຍເຮັດແບບນີ້ ສອງ ຫຼື ສາມເທື່ອ ໃຊ້ມືລີດທ້ອງລາວທຸກເທື່ອ ຫາກມີສິ່ງປະກົດຂອງເສຍອອກມາທາງຮູທະວານກໍ່ໃຫ້ເຮັດຄວາມສະອາດລ້າງໃຫ້ສະອາດ ແລະ ປິດດ້ວຍສຳລີ ຫຼື ແມ່ນຫຍັງກໍ່ຕາມທີ່ໃຊ້ແທນໄດ້ ຫາກບໍ່ສາມາດປົກປິດໄດ້ກໍ່ໃຊ້ຜົງດິນ ຫຼື ອຸປະກອນການແພດທີ່ທັນສະໄຫມ່ເຊັ່ນຜ້າກ໊ອດ ເປັນຕົ້ນ.

ຈາກນັ້ນໃຫ້ເຮັດການອາບນ້ຳລະຫມາດແກ່ເຂົາໃຫມ່ອີກເທື່ອ ແລະ ຫາກບໍ່ສະອາດດ້ວຍການລ້າງສາມເທື່ອກໍ່ໃຫ້ລ້າງຈົນສະອາດຄືບຫ້າເທື່ອ ຫຼື ເຈັດເທື່ອກໍ່ໄດ້ ແລ້ວເຊັດຕົວໄມຍິດດ້ວຍຜ້າ ແລ້ວຈຶ່ງສີດ ຫຼື ໃສ່ນ້ຳຫອມທີ່ຮັກແຮ້ ຂາຫນີບ ແລະ ຢູ່ຫນ້າຜາກ ແຕ່ການສີດນ້ຳຫອມທັ້ງຕົວແມ່ນຈະເປັນການດີກວ່າ ແລ້ວຈຶ່ງຮົມຜ້າທີ່ຈະໃຫ້ພັນສົບ ດ້ວຍໄມ້ຫອມ ໃນກໍລະນີທີ່ຫນວດ ແລະເລັບມືຍາວກໍໃຫ້ຕັດຖິ້ມ ແລະຫາກປະໄວ້ກໍບໍ່ໄດ້ເປັນສິ່ງທີ່ຕ້ອງຫ້າມ ບໍ່ຕ້ອງມີຜົມໃຫ້ໄມຍິດ ບໍ່ຕ້ອງໂກນຂົນຂີ້ແຮ້ ຫຼື ຂົນຈຸດລັບ

ແລະ ບໍ່ຕ້ອງຕັດປາຍຫຸ້ມອະໄວຍະວະເພດ ເພາະບໍ່ມີຫລັກຖານໃຫ້ເຮັດແບບນັ້ນ
ສຳຫລັບໄມຍິດຜູ້ຫຍິງໃຫ້ມັດຜົມຮ່ວມກັນສາມຈຸດ
ແລ້ວປ່ອຍໄວ້ທາງຫລັງ.

## ຂັ້ນຕອນທີ່ 5 ການຫໍ່ສົບ.

ທີ່ປະເສີດທີ່ສຸດຖ້າຫາກຜູ້ຕາຍ ໄມຍິດ ເປັນຜູ້ຊາຍໃຫ້ຫໍ່ດ້ວຍຜ້າກະຜັ່ນ ຫຼື ຜ້າຫໍ່ສົບສີຂາວສາມຜືນ ເປັນການດີກວ່າໂດຍບໍ່ຕ້ອງໃສ່ເສື້ອຜ້າ ຫຼື ໂພກສະຣະບັນ ດັ່ງທີ່ທ່ານນາບີ ຊໍລັລລໍຮຸ ອະໄລຮີ ວະສັລລັມ ໄດ້ເຄີຍປະຕິບັດມາ ໂດຍໃຫ້ຫໍ່ຜ້າສາມຜືນນັ້ນທີ່ລະຊັ້ນ,

ສຳຫລັບຜູ້ຫຍິງໃຫ້ເຮັດກະຜັ່ນດ້ວຍຜ້າຫ້າຜືນ ຄືເສື້ອຜ້າຄຸ້ມຫົວ ຜ້ານຸ່ງ ຜ້າຫໍ່ອີກສອງຜືນ ສຳຫລັບເດັກນ້ອຍຜູ້ຊາຍໃຫ້ເຮັດກະຜັ່ນດ້ວຍຜ້າຫໍ່ຫນຶ່ງຜືນ ຫຼື ສາມຜືນ ແລະ ເດັກນ້ອຍຜູ້ຫຍິງ ກໍ່ເຮັດກະຜັ່ນດ້ວຍເສື້ອຜ້າ ແລະ ຜ້າຫໍ່ສົບສອງຜືນ.

ບິດບັງຄັບທີ່ເປັນວາຍິບ ຫຼື ຈຳເປັນສຳຫລັບຜູ້ຕາຍທຸກ ໆ ຄົນເຊິ່ງຖືວ່າໃຊ້ໄດ້ແລ້ວກໍ່ຄືໃຊ້ສະເພາະຜ້າຫໍ່ພຽງຜືນດຽວເທົ່ານັ້ນປົກປິດໃຫ້ທົ່ວຮ່າງກາຍ
ແຕ່ວ່າຫາກໄມຍິດທີ່ເສຍຊີວິດໃນຂະນະທີ່ຄອງອິຮອມຊ່ວງໄປເຮັດຮັຈ ກໍຈະຕ້ອງອາບນ້ຳໃຫ້ເຂົາດ້ວຍນ້ຳລ້າງ ນ້ຳໃບພຸດຊາ ແລະ ຫໍ່ສົບເຂົາ ດ້ວຍຜ້ານຸ່ງ ແລະ ຜ້າຄຸມຂອງເຂົາ ຫຼືໃຊ້ຢ່າງອື່ນກໍໄດ້ແຕ່ຕ້ອງປົກປິດຫົວ ແລະ ໃບໜ້າຂອງໄມຍິດ ບໍ່ຕ້ອງໃຊ້ນ້ຳຫອມໃດໆ ເພາະເຂົາຈະຖືກຄືນຟື້ນຊີບໃນວັນກິຍາມະໃນສະພາບທີ່ກ່າວຕັລບິຍະຮ໌

ດັ່ງມີຫຼັກຖານຢືນຢັນຈາກຮະດິຊທີ່ຖືກຕ້ອງຂອງທ່ານນະບີ ໃນເລື່ອງດັ່ງກ່າວນີ້ ແຕ່ຫາກຄົນທີ່ໄມຍິດທີ່ຄອງອິຫ໌ຣອມນັ້ນເປັນຜູ້ຫຍິງ ກໍ່ໃຫ້ຫໍ່ສົບນາງຄືກັນກັບສົບຜູ້ຫຍິງທົ່ວ ໆ ໄປ ແຕ່ວ່າບໍ່ໃຫ້ໃຊ້ເຄື່ອງນໍ້າຫອມໃດ ໆ ກັບນາງ ບໍ່ຕ້ອງປິດໃບໜ້າຂອງນາງດ້ວຍຜ້າຄຸມຫນ້າ ແລະ ບໍ່ຕ້ອງໃສ່ຖົງມືໃຫ້ນາງ ແຕ່ໃຫ້ປົກປິດໃບໜ້າ ແລະ ມືຂອງນາງດ້ວຍຜ້າທີ່ໃຊ້ຫໍ່ສົບນາງເທົ່ານັ້ນພໍ ດັ່ງທີ່ອະທິບາຍຂ້າງຕົ້ນມາ.

## ຂັ້ນຕອນທີ 6: ຜູ້ທີ່ມີສິດຫຼາຍທີ່ສຸດໃນການອາບນໍ້າໃຫ້ໄມຍິດຊາຍ ລະຫມາດຢານະຊະຫ໌ໃຫ້ ແລະ ເຮັດການຝັງເຂົາຫລາຍກວ່າຜູ້ອື່ນຄື

ອັນດັບໜຶ່ງເລີຍແມ່ນຜູ້ທີ່ໄດ້ຮັບມອບໝາຍສັ່ງເສຍ "ວະສີຍະຫ໌", ຈາກນັ້ນກໍ່ແມ່ນພໍ່, ພໍ່ຕູ້ ລຸງ ອາບ່າວ ອ້າຍນ້ອງຄີງ ຕໍ່ມາກໍ່ພີ່ນ້ອງໃກ້ຊິດກັບເຂົາ ຕາມລໍາດັບຄວາມໃກ້ຊິດຕໍ່ໄປເລື້ອຍໆ ຈາກບັນດາຍາດຕິພີ່ນ້ອງຊາຍ.

ສໍາຫລັບຜູ້ທີ່ມີສິດຫຼາຍກວ່າໃນການອາບນໍ້າໃຫ້ໄມຍິດຜູ້ຫຍິງ ຄື ຜູ້ທີ່ໄດ້ຮັບມອບສັ່ງໄວ້ ຫຼື ວາສີຍະຫ໌ໄວ້ ຈາກນັ້ນກໍ່ເປັນແມ່, ຍ່າ,ແມ່ເຖົ້າ ຈາກນັ້ນກໍ່ເປັນຍາດພີ່ນ້ອງທີ່ໃກ້ຊິດກັບນາງຫລາຍທີ່ສຸດຕາມລໍາດັບຄວາມໃກ້ຊິດຕໍ່ໄປເລື້ອຍ ໆ ໃນບັນດາພັກພວກຍາດທີ່ເປັນຜູ້ຫຍິງ, ໃນກໍລະນີພືວເມຍ

ໃຫ້ພີວອາບນ້ຳສົບໃຫ້ເມຍ ແລະ ເມຍກໍ່ອາບນ້ຳໃຫ້ພີວໄດ້ ເພາະທ່ານອາບູບັກ ອັສ-ສິດດີກ ເຣາະດິຍັລລໍຮຸອັນຮຸ ນັ້ນເມຍຂອງທ່ານກໍ່ອາບນ້ຳໃຫ້ ແລະ ທ່ານອາລີ ເຣາະດິຍັລລໍຮຸອັນຮຸ ກໍ່ໄດ້ອາບນ້ຳສົບໃຫ້ເມຍຂອງທ່ານ ຄືທ່ານຟາຕິມະຮ໌ ເຣາະດິຍັລລໍຮຸອັນຮາ.

## ຂັ້ນຕອນທີ່ 7 : ລັກສະນະ ແລະ ວິທີການລະມາດຍະນະຊະຫ໌ແກ່ຜູ້ຕາຍ.

ການກ່າວຕັກບີຣມີສີ່ເທື່ອ ຕັກບີຣທຳອິດໂດຍໃຫ້ອ່ານຊູເຣາະ ອັລ- ຟາຕິຣະຫ໌ ຫາກຈະອ່ານຊູເຣາະສັ້ນ ໆ ຫຼື ອ່າຍອາຍະຫ໌ສອງອາຍະຫ໌ຕາມໄປນຳກໍ່ດີ ດັ່ງຫຼັກຖານຢືນຢັນຈາກຣະດີຊທີ່ຖືກຕ້ອງໃນເລື່ອງດັ່ງກ່າວ ເຊິ່ງລາຍງານໂດຍ ທ່ານ ອິບນຸອັບບາສ ເຣາະດິຍັລລໍຮຸ ອັນຮຸ, ແລ້ວໃຫ້ຕັກບີຣ ເທື່ອທີ່ສອງຕາມດ້ວຍການກ່າວສັນລະເສີນເສາະລະວາດແກ່ ທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລັມ ເຊັ່ນດຽວກັບທີ່ໃຊ້ອ່ານໃຫ້ອັດຕະຮີຢາ ຈາກນັ້ນກໍ່ຕັກບີຣເທື່ອທີ່ສາມແລ້ວກ່າວດຸອາວ່າ: ຄຳແປ : "ໂອ້ ອັລລໍຮ໌ ຂໍພຣະອົງໄດ້ຊົງອະໄພໂທດຕໍ່ຜູ້ມີຊີວິດຂອງເຮົາ ຕໍ່ຜູ້ທີ່ຕາຍຂອງເຮົາ ຜູ້ທີ່ຢູ່ ນະຈຸດນີ້ ແລະຜູ້ທີ່ບໍ່ໄດ້ຢູ່ນະຈຸດນີ້ ເດັກ ໆ ຂອງເຮົາ ແລະຜູ້ໃຫຍ່ຂອງເຮົາ ບັນດາຊາຍຂອງເຮົາ ແລະບັນດາຍິງຂອງເຮົາ ໂອ້ ອັລລໍຮ໌ຜູ້ໃດທີ່ພຣະອົງໃຫ້ເຂົາມີຊີວິດຢູ່ໃນກຸ່ມພວກເຮົາ ຂໍໃຫ້ພຣະອົງຊົງໄດ້ໃຫ້ເຂົາມີຊີວິດຢູ່ໃນອິສລາມ ແລະ ຜູ້ໃດທີ່ພຣະອົງຊົງໃຫ້ເຂົາຕາຍໄປຈາກພວກເຮົາ

ກໍຂໍໃຫ້ເຮັດໃຫ້ເຂົາຕາຍຢູ່ໃນອີມານ ໂອ້ ອັລລໍອ໌ ຂໍພຣະອົງຊົງອະໄພໂທດແກ່ເຂົາ ແລະຊົງເມດຕາເຂົາ ແລະເຮັດໃຫ້ທາງເຂົ້າຂອງເຂົາກວ້າງ ແລະຊົງໂປດຊໍາລະລ້າງເຂົາໂດຍນໍ້າ ຫິມະ ແລະ ລູກຫມາກເຫັບ ແລະ ຊໍາລະລ້າງຄວາມຜິດຂອງເຂົາ ເຊັ່ນດຽວກັບທີ່ຜ້າຂາວທີ່ຊໍາລະລ້າງໃຫ້ສະອາດຈາກສິ່ງເປິເປື້ອນ ໄດ້ປ່ຽນໃຫ້ແກ່ເຂົາເຊິ່ງທີ່ອາໄສທີ່ດີກວ່າບ້ານຂອງເຂົາ ແລະຄອບຄົວທີ່ດີກວ່າຄອບຄົວເຂົາ ແລະເຮັດໃຫ້ເຂົາໄດ້ເຂົ້າສວນສະຫວັນ ແລະປົກປ້ອງເຂົາຈາກການທົດສອບໃນລຸ່ມຝັງສົບ ແລະການລົງໂທດແຫ່ງໄຟນາລົກ ແລະເຮັດໃຫ້ລຸ່ມຝັງສົບຂອງເຂົາກວ້າງຂື້ນ ແລະຊົງເຮັດໃຫ້ເຂົາໄດ້ແສງສະຫວ່າງໃນນັ້ນ ໂອ້ ອັລລໍອ໌ ຂໍພຣະອົງຊົງຢ່າໄດ້ເຮັດໃຫ້ຜົນລາງວັນຂອງເຂົາເປັນທີ່ຫ່ວງຫ້າມແກ່ເຮົາ (ຄືໄດ້ໂປດປະທານບຸນແກ່ເຮົາທີ່ໄດ້ລະຫມາດຊົບໃຫ້ແກ່ເຂົາ) ແລະ ຊົງໂປດຢ່າໃຫ້ເຮົາຫລົງຜິດຫລັງຈາກເຂົາ" ຈາກນັ້ນກໍໃຫ້ຕັກບີຣເທື່ອທີ່ສີ່ ແລ້ວຈຶ່ງໃຫ້ສະລາມທາງຂວາເທື່ອດຽວ ເປັນອັນສິ້ນສຸດການລະຫມາດຍະນາຊະຫ໌.

ແລະເປັນການສົ່ງເສີມໃຫ້ຍົກມືຂື້ນທຸກຄັ້ງຂະນະຕັກບີຣ, ກໍລະນີໃນຍົດຜູ້ຫຍິງໃຫ້ກ່າວ ອັລລໍຮຸມມັນພິຣ ລະຮາ... ຈົນຈົບ ແລະ ຫາກໃນຍົດສອງຄົນໃຫ້ກ່າວ ອັລລໍຮຸມມັກພິຣ ລະຮູມາ .....ຈົນຈົບ, ຫາກຫຼາຍກວ່ານັ້ນໃຫ້ກ່າວ ອັລລໍຮຸມມັກພິຣ ລະຮຸມ .... ຈົນຈົບ, (ຄືປ່ຽນຄໍາສັບພະນາມຕາມເພດ

ແລະຈຳນວນມັຍຍິດ - ຜູ້ແປ) ແລະ ຫາກເປັນໄມຍິດເດັກນ້ອຍ
ເຮົາຈຳເປັນຕ້ອງປ່ຽນດູອາອະໄພໂທດໃຫ້ແກ່ເຂົາດັ່ງນີ້: ຄຳແປ : ໂອ້ ອັລລໍຮ໌ ຂໍພຣະອົງໄດ້ໂປດໃຫ້ເຂົາເປັນລາງວັນລ່ວງໜ້າ ເປັນສິນບັດສຳລັບພໍ່ແມ່ຂອງເຂົາ
ແລະໄດ້ໂປດໃຫ້ເຂົາເປັນຜູ້ໃຫ້ການຊ່ວຍເຫຼືອທີ່ໄດ້ຮັບການຕອບສະໜອງ ໂອ້ ອັລລໍຮ໌ ໄດ້ໂປດໃຫ້ຕາຊັ່ງຂອງເຂົາທັ້ງສອງໜັກ
ແລະປະທານລາງວັນອັນຍິ່ງໃຫຍ່ໃຫ້ແກ່ເຂົາທັ້ງສອງ
ແລະໄດ້ໂປດໃຫ້ເຂົາໄດ້ຢູ່ພ້ອມກັບບັນດາກັນລະຍານິດກຸ່ມຊິນທີ່ສັດທາກ່ອນໜ້ານີ້
ແລະໄດ້ໂປດເຮັດໃຫ້ເຂົາຢູ່ພາຍໃຕ້ການອະນຸເຄາະຂອງທ່ານນາບີອິບຣໍຮີມ ອະລັຍຮິສລາມ
ແລະຂໍໃຫ້ປົກປ້ອງເຂົາດ້ວຍຄວາມເມດຕາຂອງພຣະອົງຈາກການລົງໂທດແຫ່ງນາລົກ.

ແບບຢ່າງສຸນນະຫ໌ໃຫ້ອິມາມ (ຜູ້ນຳລະຫມາດ) ຢືນຊື່ຕົງກັບຫົວຂອງໄມຍິດຊາຍ "ແລະ ຢືນຢູ່ລະວ່າງກາງສຳຫລັບໄມຍິດຜູ້ຫຍິງ", ໃນກໍລະນີທີ່ມີໄມຍິດຫຼາຍຄົນໃຫ້ວາງໄມຍິດຊາຍ ຖັດຈາກອິມາມ ແລະ ວາງໄມຍິດຫຍິງ ຖັດຈາກໄມຍິດຊາຍ ຮັນໄປທາງດ້ານກິບລັດ
ແລະຫາກມີໄມຍິດທີ່ເປັນເດັກນ້ອຍຊາຍຢູ່ນຳໃຫ້ວາງເຂົາກ່ອນ, ຫລັງຈາກນັ້ນຈຶ່ງເປັນໄມຍິດຫຍິງ ແລ້ວຖັດໄປກໍເປັນໄມຍິດທີ່ເປັນເດັກນ້ອຍຜູ້ຫຍິງ,
ໃຫ້ວາງຫົວໄມຍິດເດັກນ້ອຍຊາຍສະເໝີກັບຫົວມັຍຍິດຊາຍ

ແລະ ວາງໄມ້ຍົດຫຍິງໃຫ້ກົງກາງລຳຕົວຂອງມັຍຍິດຫຍິງ ສະເຫມີກັບຫົວໄມ້ຍົດຊາຍ
ໃນທຳນອງດຽວກັນໃຫ້ວາງຫົວມັຍຍິດເດັກນ້ອຍຫຍິງສະເຫມີ ຫົວມັຍຍິດຫຍິງ ແລະ ຢູ່ກົງກາງລຳຕົວຂອງມັຍຍິດເປັນເດັກນ້ອຍຜູ້ຫຍິງຊື່ເທົ່າກັບ ຫົວຂອງມັຍຍິດຊາຍ ໃຫ້ຜູ້ຕາມ (ມະມູມ) ຢືນທາງຫລັງອິມາມ ນອກຈາກວ່າມະມູມຄົນໃດທີ່ບໍ່ສາມາດຫາບ່ອນຢືນທາງຫລັງ ອິມາມໄດ້ ກໍ່ໃຫ້ຢືນທາງຂ້າງຂອງອິມາມໄດ້.

## ຂັ້ນຕອນທີ່ 8 : ລັກສະນະຂອງການຝັງສົບຄົນຕາຍ

ຄຳສັ່ງຂອງສາສະໜາໄດ້ກຳນົດໃຫ້ຂຸດຫລຸມເລິກເຄິ່ງຕົວຂ ອງຜູ້ຊາຍ ໃຫ້ເຮັດຊ່ອງລະຫັດ ຫຼື ແຊະດິນເປັນຊ່ອງເພື່ອເກັບມັຍຍິດນັ້ນຢູ່ທາງດ້ານກິບລະ ຕ້ອງວາງສົບລົງໃນຊ່ອງລະຫັດໂດຍໃຫ້ສົບນອນເທິ່ງສີຂ້າງ ດ້ານຂວາ
ແລ້ວຈຶ່ງເປີດຫຼືແກະມັດຜ້າອອກໂດຍບໍ່ຕ້ອງດຶ່ງອອກມາແຕ່ໃ ຫ້ປ່ອຍຖິ້ມໄວ້ແບບນັ້ນ ບໍ່ຕ້ອງເປີດຫນ້າ ບໍ່ວ່າຈະເປັນຊາຍຫຼືຫຍິງ
ແລ້ວຈຶ່ງວາງກ້ອນອິດປິດຊ່ອງໄວ້ແລະປິດຊອກຫລືບຫຼືຊ່ອງນ້ ອຍໆໃຫ້ດີເພື່ອກັນດິນເຂົ້າໄປໃນຊ່ອງໃນນັ້ນ
ແລ້ວຈຶ່ງປົກຄຸມດ້ວຍດິນເປັນອັນສຳເລັດການຝັງ
ແລະສິ່ງເສີມໃຫ້ກ່າວດູອາໃນຂະນະວາງສົບລົງຫລຸມວ່າ:
ຄຳອ່ານ : ບິສມິລລາຮ໌ ວະອະລາ ມິລລະຕິ ເຣາະສູລິລລາຮ.

ຄຳແປ : ດ້ວຍພຣະນາມແຫ່ງອັລລໍຮ໌ ແລະ ຕາມແບບສະບັບທ່ານສາດສະດາທູດຂອງອັລລໍຮ໌
ແລະໃຫ້ຖົມຫລຸມເປັນເນີນສູງຂຶ້ນປະມານຫນຶ່ງຄືບ

ແລ້ວວາງກ້ອນຫີນເທິ່ງກູໂບຮ ຫາກສາມາດເຮັດໄດ້ກໍ່ເຮັດແລ້ວຈຶ່ງສີດດ້ວຍນ້ຳ.

ອິສລາມໄດ້ກຳຫນົດໃຫ້ຜູ້ມາຮ່ວມຝັງຢືນໄວ້ອາລັຍທີ່ປາກຫລຸ່ມເພື່ອຂໍດູອາໃຫ້ແກ່ຜູ້ຕາຍເນື່ອງຈາກທ່ານນາບີ ຊໍລລັລລໍຮຸ ອະລັຍຮີ ວະສັລລັມ ເຄີຍຢືນທີ່ປາກຫລຸ່ມເມື່ອທ່ານທຳການຮຽບຮ້ອຍຈາກການຝັງ ໂດຍທ່ານໄດ້ກ່າວໄວ້ວ່າ:

"اسْتَغْفِرُوا لِأَخِيكُمْ، وَاسْأَلُوا لَهُ التَّثْبِيتَ، فَإِنَّهُ الْآنَ يُسْأَلُ"

"ຈົ່ງຂໍອະໄພຍະໂທດ ຈາກອັລລໍຫ໌ ໃຫ້ແກ່ພີ່ນ້ອງຂອງພວກທ່ານ ແລະ ຈົ່ງຂໍຄວາມມັ່ນຄົງໃຫ້ແກ່ລາວ ເພາະແທ້ຈິງໃນຂະນະນີ້ ລາວກຳລັງຖືກສອບຖາມຢູ່"[1].

## ຂັ້ນຕອນທີ່ 9 : ສາສະນາບັນຍັດທີ່ກຳນົດໃຫ້ຜູ້ທີ່ຍັງບໍ່ທັນໄດ້ເຮັດການລະຫມາດຍັນນະຊະຫ໌

ເນື່ອງຈາກເຂົາມາບໍ່ທັນໃຫ້ເຂົາໄດ້ລະຫມາດແກ່ຜູ້ຕາຍຫລັງສິ້ນສຸດການຝັງທີ່ຫລຸ່ມສົບເຂົາໄດ້ ເພາະທ່ານນະບີ ຊໍລລັລລໍຮຸ ອະລັຍຮີ ວະສັລລັມ ເຄີຍປະຕິບັດເຊັ່ນດຽວກັນສຳຫລັບຊ່ວງໄລຍະເວລາຂອງການລະຫມາດດັ່ງກ່າວຕ້ອງຢູ່ພາຍໃນໄລຍະເວລາຫນຶ່ງເດືອນ ຫຼື ນ້ອຍກວ່ານັ້ນ ແຕ່ຫາກວ່າເວລາລ່ວງເລີຍຫຼາຍກວ່ານັ້ນບໍ່ຈຳເປັນຕ້ອງລະຫມາດທີ່ຫລຸ່ມຝັງສົບເພາະບໍ່ມີຫຼັກຖານຢືນຢັນວ່າທ່ານນະບີ

---

[1] ບັນທຶກໂດຍອາບຸດາວູດ ເລກທີ່ (3221) ແລະ ທ່ານຮາກິມ (3/ 399).

ຊໍວລັລລໍຮຸ ອະລັຍຮິ ວະສັວລັມ ໄດ້ປະຕິບັດແບບນັ້ນ.

## ຂັ້ນຕອນທີ່ 10 :

## ບໍ່ອະນຸຍາດໃຫ້ຄອບຄົວຂອງຜູ້ຕາຍຈັດລ້ຽງອາຫານ ;

ດັ່ງຄຳກ່າວຂອງທ່ານ ຈະຣີຣ ອັບດຸລເລາະ ອັລ-ບະຍະລີ ເຮາະທາບະຫ໌ຜູ້ຊີງກຽດທ່ານຫນຶ່ງ ເຮາະດີຍັລລໍຮຸ ອັນຮູ ທີ່ວ່າ

"كُنَّا نَعُدُّ الاِجْتِمَاعَ إِلَى أَهْلِ الْمَيِّتِ، وَصَنْعَةَ الطَّعَامِ بَعْدَ الدَّفْنِ مِنَ النِّيَاحَةِ"

"ເຮົາຖືວ່າ ການຮ່ວມຕົວກັນທີ່ເຮືອນຂອງຄອບຄົວຜູ້ຕາຍ ແລະ ຈັດກຽມເຮັດອາຫານຫຼັງຈາກຝັງສົບຮຽບຮ້ອຍແລ້ວນັ້ນ ເປັນສ່ວນໜຶ່ງຂອງນິຍາຣະຫ໌ (ການສະແດງຄວາມອາໄລທີ່ບໍ່ອານຸຍາດໃຫ້ເຮັດ)"[1]

ລາຍງານໂດຍ ທ່ານອິມາມອະຫ໌ມັດ ດ້ວຍສາຍສືບທີ່ເຊື່ອຖືສ່ວນການເຮັດອາຫານໃຫ້ຄອບຄົວຜູ້ຕາຍ ຫຼື ບັນດາແຂກທີ່ມາຮ່ວມງານສົບຂອງພວກເຂົາຖືວ່າເຮັດໄດ້ ສາສະໜາອະນຸຍາດໃຫ້ເຮັດອາຫານໃຫ້ຍາດຕິພີ່ນ້ອງແລະເພື່ອນບ້ານເຮືອນຄຽງຂອງຜູ້ຕາຍໄດ້ ເພາະທ່ານນະບີ ຊໍວລັລລໍຮຸ ອະລັຍຮິ ວະສັວລັມ ເມື່ອຮູ້ເຖິງການຕາຍຂອງທ່ານ ຍະຟັຣ ບິນອາບີຕໍລິບ ເຮາະດີຍັລລໍຮຸ ອັນຮູ ທີ່ຢູ່ປະເທດຊີເວຍ ທ່ານໄດ້ສັ່ງໃຫ້ຄອບຄົວຂອງທ່ານເຮັດອາຫານລ້ຽງໃຫ້ຄອບຄົວທ່ານຍະຟັຣ ທ່ານນະບີຊໍລັລລໍຮຸ ອະລັຍຮິ ວະສັລລັມ ໄດ້ກ່າວໄວ້ວ່າ:

"إِنَّهُ أَتَاهُمْ مَا يَشْغَلُهُمْ"

---

[1] ບັນທຶກໂດຍ ທ່ານອິບນຸມາຈະຫ໌ ເລກທີ(1612) , ແລະ ທ່ານອິມ່າມອະມັດ 2/ 204). .

"ແທ້ຈິງແລ້ວ ໄດ້ມີສິ່ງທີ່ເຮັດໃຫ້ພວກເຂົາຕ້ອງກັງວົນ"[1]

ບໍ່ໄດ້ຖືວ່າເປັນຄວາມຜິດໃນກໍລະນີທີ່ຄອບຄົວຂອງຜູ້ຕາຍຈະໄດ້ເຊີນຊວນໃຫ້ເພື່ອນບ້ານແລະຄົນອື່ນ ໆ ມາຮ່ວມຮັບປະທານອາຫານທີ່ຖືກກະກຽມ ແລະ ຖືກມອບໃຫ້ເຂົາ ແລະຊ່ວງເວລາຂອງການເຮັດດັ່ງກ່າວນີ້ບໍ່ໄດ້ຖືກຈໍາກັດໄວ້ຢ່າງແນ່ນອນ ເທົ່າທີ່ຮູ້ມາຈາກຄໍາສັ່ງທາງຊະຣີອະຫ໌.

## ຂັ້ນຕອນທີ 11 : ບໍ່ອະນຸຍາດ ຫ້າມບໍ່ໃຫ້ແມ່ຫຍິງໄວ້ທຸກເປັນເວລາຫຼາຍກວ່າສາມມື້

ນອກຈາກນາງຈໍາເປັນຕ້ອງໄວ້ທຸກເພື່ອສາມີຂອງນາງເທົ່ານັ້ນ ຫຼື ນອກຈາກວ່ານາງຖືພາຈົນກວ່າຈະເກີດລູກ ຈາກຫຼັກຖານຢືນຢັນເລື່ອງດັ່ງກ່າວໃນຮະດີຊ ຊໍຮີຫ໌, ສ່ວນຜູ້ຊາຍບໍ່ເປັນທີ່ອະນຸຍາດໃຫ້ໄວ້ທຸກ ບໍ່ວ່າຈະເປັນຍາດຕິພີ່ນ້ອງ ຫຼື ຄົນອື່ນໆ.

ສ່ວນຜູ້ຊາຍບໍ່ຈໍາເປັນທີ່ອະນຸຍາດໃຫ້ໄວ້ທຸກບໍ່ວ່າຈະເປັນຍາດພີ່ນ້ອງ ຫຼື ຄົນອື່ນ.

## ຂັ້ນຕອນທີ່ 12 : ສາສະໜາໄດ້ສົ່ງເສີມໃຫ້ຜູ້ຊາຍໄດ້ໄປຢ້ຽມຢາມກຸໂບຣສະຖານທີ່ຝັງສົບ ເປັນບ້າງຄັ້ງບ້າງຄາວ

[1] ບັນທຶກໂດຍມຸສລິມ ບົດອັລຈະນາອິຊ (976), ອັນນະສາອີ ບົດອັລຈະນາອິຊ (2034), ອະບູດາວູດ ບົດອັລຈະນາອິຊ (3234), ອິບນຸມາຈະຫ໌ ສິ່ງທີ່ມາໃນ ອັລຈະນາອິຊ (1569), ອະຫ໌ມັດ (2/441).

**ເພື່ອຂໍດູອາໃຫ້ແກ່ຜູ້ຕາຍ ແລະ ຂໍດູອາແຫ່ງຄວາມເມດຕາຕໍ່ພວກເຂົາ ເພື່ອລໍາລຶກເຖິງຄວາມຕາຍ ແລະສິ່ງທີ່ຈະເກີດຂຶ້ນແກ່ເຂົາຫລັງຈາກຄວາມຕາຍ**

ດັ່ງທີ່ທ່ານນະບີ ຊໍລລັລລໍຮຸ ອະໄລຮິ ອະສັລລັມ ໄດ້ກ່າວວ່າ :

"زُورُوا الْقُبُورَ، فَإِنَّهَا تُذَكِّرُكُمُ الْآخِرَةَ"

“ພວກທ່ານຈົ່ງໄປຢຽມຢາມກຸໂບຣ ເພາະແທ້ຈິງ ມັນເຮັດໃຫ້ພວກທ່ານລໍາລຶກເຖິງອາຄິເຣາະຫ໌”[1] ບັນທຶກໂດຍທ່ານມຸສລິມໃນຊໍຮີຫ໌ຂອງທ່ານ. ທ່ານນະບີ ຊໍລລັລລໍຮູ ອະລັຍຮິ ອະສັລລັມ ໄດ້ເຄີຍສອນໃຫ້ບັນດາເສາະຫາບະຫ໌ຂອງທ່ານກ່າວ ຖ້າໄປຢ້ຽມຢາມກຸໂບຣ ວ່າ :

"السَّلَامُ عَلَيْكُمْ أَهْلَ الدِّيَارِ مِنَ الْمُؤْمِنِينَ وَالْمُسْلِمِينَ، وَإِنَّا إِنْ شَاءَ اللَّهُ بِكُمْ لَاحِقُونَ، نَسْأَلُ اللَّهَ لَنَا وَلَكُمُ الْعَافِيَةَ، يَرْحَمُ اللَّهُ الْمُتَقَدِّمِينَ مِنَّا وَالْمُسْتَأْخِرِينَ"

ຄໍາອ່ານ : “ອັສສະລາມຸ ອະລັຍກຸມ ອະຫ໌ລັດ ດິ ຍາຣ ມິນັລ ມຸມິນີນ ວັລ ມຸສລິມີນ, ວະອິນນາ ອິນຊາອັລລໍຮ໌ ບີກຸມ ລ່າຫິກູນ, ນັສອະລຸລລໍ ຣະລະນາ ວະລະກຸມຸລ ອາຟີຍະຮ໌ ຍັຣຣະມຸລລໍຮຸ ມຸສຕັກດິມີນະ ມິນນາ ວັລມຸສຕະ ຄິຣີນ”.

ຄໍາແປ:

“ຂໍຄວາມສັນຕິສຸກຈົ່ງມີແດ່ພວກທ່ານເລົ່າສາວສູສານທັງຫຼາຍ ຈາກບັນດາມຸມິນຜູ້ສັດທາ ແລະມຸສະລິມຜູ້ມອບຕົນ ແລະຫາກອັລລໍຮ໌ປະສົງພວກເຮົາກໍ່ຈະເປັນຜູ້ຕິດຕາມພວກ

1 ບັນທຶກໂດຍ ທ່ານອິບນຸມາຈະຫ໌ ເລກທີ່ (1569) , ກວດກາໂດຍທ່ານອັລ-ອັລບານີ.

ທ່ານ
ເຮົາຂໍຈາກອັລລໍຮ໌ໄດ້ໂປດປະທານຄວາມປອດໄພແກ່ພວກເຮົາ ແລະ ພວກທ່ານ ຂໍພຣະອົງໄດ້ຊົງເມດຕາບັນດາຜູ້ (ເສຍຊີວິດ) ກ່ອນຫນ້າ ແລະ ຫລັງພວກເຮົາ”.[1]
ສໍາຫຼັບແມ່ຍິງບໍ່ມີຫຼັກຖານຈາກບິດບັນຍັດໃຫ້ຍຽມກຸໂບຣ ເພາະທ່ານນະບີ ຊັລລັລລໍຮຸ ອະໄລຮີ ວະສັລລໍາ ໄດ້ສາບແຊ່ງບັນດາແມ່ຍິງທີ່ໄດ້ໄປຍຽມຍາມກຸໂບຣ ແລະ ເພາະຢ້ານວ່າຈະເກີດພິຕນະຫ໌ ແກ່ນາງ ແລະ ການທີ່ນາງມີຄວາມອົດທົນນ້ອຍ, ໃນທໍານອງດຽວກັນ ຈຶ່ງບໍ່ເປັນທີ່ອະນຸມັດສໍາຫຼັບນາງທີ່ຈະຕິດຕາມໄປຝັງສົບ ເນື່ອງຈາກທ່ານນະບີ ຊັລລັລລໍຮຸ ອະໄລຮີ ວະສັລລໍາ ໄດ້ຫ້າມພວກນາງ ກ່ຽວກັບເລື່ອງນີ້ໄວ້. ສ່ວນການລະຫມາດຢັນນາຊະຫ໌ທີ່ມັສຍິດ ຫຼື ວ່າທີ່ມຸຊໍລລາຫ໌ນັ້ນເປັນບົດບັນຍັດສໍາຫຼັບຜູ້ຊາຍ ຜູ້ຍິງມຸສລິມທັງໝົດ.

ນີ້ຄືທ້າຍຂອງສິ່ງທີ່ຂ້າພະເຈົ້າສາມາດຮອບຮ່ວມໄວ້ໄດ້.
ຂໍພຣະອົງອັລລໍຮ໌
ໄດ້ໂປດປະທານຄວາມສັນຕິສຸກແດ່ທ່ານນະບີຂອງເຮົາ ນະບີມຸຮໍາມັດ, ຄອບຄົວຂອງທ່ານ , ແລະ ບັນດາສາວົກໂດຍທົ່ວຫນ້າກັນ

***

1 ບັນທຶກໂດຍທ່ານມຸສລິມ ເລກທີ (975).

# الفهرس


ບົດຮຽນສຳຄັນສຳຫຼັບຜູ້ຄົນທົ່ວໄປ.......2
ດ້ວຍພຣະນາມຂອງອັລລໍຫ໌ ຜູ້ຊົງກະລຸນາປານີ ຜູ້ຊົງເມດຕາສະເໝີ.......2
ຄຳນຳຜູ້ຂຽນ.......2
ບົດຮຽນທີ່ ໜຶ່ງ : ສູເຣາະຫ໌ອັລ-ຟາຕິຫະຫ໌ ແລະ ສູເຣາະຫ໌ສັ້ນໆ.......3
ບົດຮຽນທີ່ສອງ : ຫຼັກການອິສລາມ.......3
ບົດຮຽນທີ່ສາມ : ຫຼັກການສັດທາ.......5
ບົດຮຽນທີ່ ສີ່ : ປະເພດຂອງເຕົາຮີດ ແລະ ຊີຣິກ.......5
ບົດຮຽນ ທີ່ ຫ້າ: ອັລ-ອິຫ໌ຊານ.......13
ບົດຮຽນທີ່ຫົກ: ເງື່ອນໄຂຂອງການລະຫມາດ.......13
ບົດຮຽນທີ່ເຈັດ: ຫຼັກການລະຫມາດ.......14
ບົດຮຽນທີ່ແປດ : ຂໍ້ບັງຄັບຂອງການລະຫມາດ.......15
ບົດຮຽນທີ່ເກົ້າ : ການອ່ານ ອັດຕະຮີຢາ.......15
ບົດຮຽນທີສິບ : ແບບຢ່າງຂອງການລະຫມາດ (ຊຸນນະຂອງການລະຫມາດ).......18
ບົດຮຽນທີ່ ສິບເອັດ: ສິ່ງທີ່ເຮັດໃຫ້ລະຫມາດເສຍ.......20
ບົດຮຽນທີ່ ສິບສອງ : ເງື່ອນໄຂຂອງການອາບນ້ຳລະຫມາດ.......21
ບົດຮຽນທີ່ ສິບສາມ : ຂໍ້ບັງຄັບຂອງການອາບນ້ຳລະຫມາດ.......22
ບົດຮຽນທີ່ ສິບສີ່ : ສິ່ງທີ່ເຮັດໃຫ້ເສຍນ້ຳລະຫມາດ.......22
ບົດຮຽນທີ່ ສິບຫ້າ : ການມີຄຸນລັກສະນະນິໄສຕາມທີ່ເປັນບົດຄວາມສັ່ງສອນສຳຫລັບມຸສລິມທຸກຄົນ.......24
ບົດຮຽນທີ່ ສິບຫົກ : ການມີມາລະຍາດແບບອິສລາມ.......25
ບົດຮຽນທີ່ ສິບເຈັດ : ຂໍຕັກເຕືອນໃຫ້ອອກຫ່າງຈາກການຕັ້ງພາຄີ ຫຼື ຊີຣິກ ແລະ ການຜ່າຝືນຕ່າງ ໆ.......26
ບົດຮຽນທີ່ ສິບແປດ : ການກະກຽມສົບ (ໄມຍິດ) ແລະ

ການລະຫມາດຈະນາຊະຫ໌ (ລະຫມາດຄົນຕາຍ) ........................................ 27
ປະການທີ່ສອງ: ເມື່ອແນ່ໃຈວ່າຄວາມຕາຍໄດ້ມາຮອດລາວແລ້ວ ຄືສິ້ນຊີບລົງຢ່າງແນ່ໃຈ ໃຫ້ລົດເປືອກຕາທັ້ງສອງຂອງລາວ ຈົນປິດສະນິດ ແລະ ຈັດເຄຣົາຂອງລາວ ຕາມທີ່ປະກົດຫຼັກຖານໃນສຸນນະຫ໌. ................. 28
ປະການທີ່ສາມ: ຈັດການອາບນ້ຳໃຫ້ໄມຍິດ ຫຼື ສົບທີ່ເປັນມຸສລິມ ນອກຈາກວ່າລາວ ເສຍຊີວິດໃນສະພາບຂອງຊະຮີດ ເຊັ່ນ ການຕາຍໃນສະນາມຮົບ ເຊິ່ງບໍ່ຈຳເປັນຕ້ອງອາບນ້ຳ ຫຼື ລະຫມາດໃຫ້ແກ່ລາວ ແຕ່ວ່າໃຫ້ນຳໄປຝັງພ້ອມເສື້ອຜ້າທີ່ລາວສວມໃສ່ຢູ່ ໂດຍບໍ່ຕ້ອງປ່ຽນ ເພາະທ່ານນະບີ ຊັລລັລລໍຮຸ ອະໄລຮິ ວະສັລລໍາ ບໍ່ໄດ້ອາບນ້ຳ ແລະ ລະຫມາດໃຫ້ໄມຍິດໃດທີ່ຕາຍໃນສະນາມຮົບອຸຫຸດ. ......................... 28
ປະການທີ່ສີ່ : ລັກສະນະຂອງການອາບນ້ຳໃຫ້ຜູ້ຕາຍ (ສົບ). .................... 28
ການອາບນ້ຳໄມຍິດ ຈະຕ້ອງມີການປົກປິດເອົາເຮາະ “ຮ່າງກາຍ” ຂອງຜູ້ຕາຍ
ແລ້ວໃຫ້ຍົກຫົວຂອງເຂົາເລັກນ້ອຍເພື່ອລີດທ້ອງຂອງລາວຄ່ອຍໆ
ດ້ວຍຄວາມອ່ອນໂຍນ ຜູ້ທີ່ເຮັດການອາບນ້ຳໄມຍິດຄວນໃຊ້ຜ້າພັນມື ຫຼື ໃສ່ຖົງມືຢາງເພື່ອເປັນການປ້ອງກັນເຊື້ອພະຍາດ
ແລ້ວຈຶ່ງອາບນ້ຳລະຫມາດໃຫ້ລາວ ລ້າງຫົວ ແລະ ຫນວດເຄົາຂອງເຂົາດ້ວຍນ້ຳລ່າ ແລະ ນ້ຳທີ່ປະສົມໃບພຸດຊາ ຫຼື ໃບອື່ຫຍັງກໍ່ໄດ້ທີ່ຄາຍຄືກັບເຊິ່ງກໍ່ສາມາດໃຊ້ໄດ້
ຈາກນັ້ນໃຫ້ລ້າງລຳຕົວດ້ານຂວາຕາມດ້ວຍດ້ານຊ້າຍເຮັດແບບນີ້ ສອງ ຫຼື ສາມເທື່ອ ໃຊ້ມືລີດທ້ອງລາວທຸກເທື່ອ
ຫາກມີສິ່ງປະກົດຂອງເສຍອອກມາທາງຮູທະວານກໍ່ໃຫ້ເຮັດຄວາມສະອາດ ລ້າງໃຫ້ສະອາດ ແລະ ປິດດ້ວຍສຳລີ ຫຼື ແມ່ນຫຍັງກໍ່ຕາມທີ່ໃຊ້ແທນໄດ້ ຫາກບໍ່ສາມາດປົກປິດໄດ້ກໍ່ໃຊ້ຜົງດິນ ຫຼື ອຸປະກອນການແພດທີ່ທັນສະໃຫມ່ເຊັ່ນຜ້າກ໊ອດ ເປັນຕົ້ນ. .................... 28
ຂັ້ນຕອນທີ່ 5 ການຫໍ່ສົບ. ........................................................................ 30
ຂັ້ນຕອນທີ 6: ຜູ້ທີ່ມີສິດຫຼາຍທີ່ສຸດໃນການອາບນ້ຳໃຫ້ໄມຍິດຊາຍ ລະຫມາດຍານະຊະຫ໌ໃຫ້ ແລະ ເຮັດການຝັງເຂົາຫລາຍກວ່າຜູ້ອື່ນຄື ...... 31
ຂັ້ນຕອນທີ່ 7 : ລັກສະນະ ແລະ ວິທີການລະມາດຍະນະຊະຫ໌ແກ່ຜູ້ຕາຍ. 32

ຂັ້ນຕອນທີ່ 8 :  ລັກສະນະຂອງການຝັງສົບຄົນຕາຍ ................................ 35
ຂັ້ນຕອນທີ່ 9 : ສາສະນາບັນຍັດທີ່ກຳນົດໃຫ້ຜູ້ທີ່ຍັງບໍ່ທັນໄດ້ເຮັດການລະຫມາດຍັນນະຊະຫ໌................................................................................ 36
ຂັ້ນຕອນທີ່ 10 : ບໍ່ອະນຸຍາດໃຫ້ຄອບຄົວຂອງຜູ້ຕາຍຈັດລ້ຽງອາຫານ; . 37
ຂັ້ນຕອນທີ 11 : ບໍ່ອະນຸຍາດ ຫ້າມບໍ່ໃຫ້ແມ່ຫຍິງໄວ້ທຸກເປັນເວລາຫຼາຍກວ່າສາມມື້ ............................ 38
ຂັ້ນຕອນທີ່ 12 : ສາສະຫນາໄດ້ສົ່ງເສີມໃຫ້ຜູ້ຊາຍໄດ້ໄປຢ້ຽມຢາມກຸໂບຣສະຖານທີ່ຝັງສົບເປັນບ້າງຄັ້ງບ້າງຄາວ ເພື່ອຂໍດູອາໃຫ້ແກ່ຜູ້ຕາຍ ແລະ ຂໍດູອາແຫ່ງຄວາມເມດຕາຕໍ່ພວກເຂົາ ເພື່ອລຳນຶກເຖິງຄວາມຕາຍ ແລະສິ່ງທີ່ຈະເກີດຂຶ້ນແກ່ເຂົາຫລັງຈາກຄວາມຕາຍ;................................ 38

❋❋❋

رئاسة الشؤون الدينية
بالمسجد الحرام والمسجد النبوي

# رسالة الحرمين

# Message of The Two Holy Mosques

Guidance content for the visitors of the Holy Mosque and the Prophet's Mosque in languages.